# ຜູ້ແທນປະຊາຊົນ
PHOUTHEN PASAXON

25-28 ມັງກອນ 2022
ປີທີ 11
ສະບັບທີ 814

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ເດີ່ນທາດຫຼວງ ຕູ້ ປ.ນ 662 ໂທລະສັບ ແລະ ໂທລະສານ: 413522, 454563 Email: phouthen.na@gmail.com

## ຮອງປະທານ ສພຊ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ຢູ່ແຂວງຄຳມ່ວນ



(ສພຊ) ໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ຊຸດທີ II ທີ່ໄດ້ຈັດຂຶ້ນໃນລະຫວ່າງວັນທີ 11-14 ມັງກອນ 2022 ທີ່ສະໂມສອນຫລັກ 4 ແຂວງຄຳມ່ວນ ເຊິ່ງໃນວາລະດັ່ງກ່າວ ທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ (ສພຊ) ກໍໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ເຊິ່ງທ່ານໄດ້ກ່າວວ່າ: ກອງປະຊຸມ ໄດ້ພິຈາລະນາຮັບຮອງເອົາ ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 9 ເດືອນ, ຄາດຄະເນໝົດປີ 2021 ແລະ ທິດທາງແຜນການ ປະຈຳປີ 2022; ບົດລາຍງານຂອງລັດຖະບານ ກ່ຽວກັບການສະຫລຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2020 ແລະ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 10 ເດືອນ, ຄາດຄະເນໝົດປີ 2021 ແລະ ທິດທາງແຜນງົບປະມານແຫ່ງລັດ ປີ 2022; ບົດສະຫລຸບການເຄື່ອນໄຫວວຽກງານ ປະຈຳປີ ແລະ ແຜນການເຄື່ອນໄຫວຂອງສະພາແຫ່ງຊາດ; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບຍຸດທະສາດພັດທະນາພະລັງງານໄຟຟ້າ ຂອງ ສປປ ລາວ (2021-2030); ບົດລາຍງານຂອງລັດຖະບານ ກ່ຽວກັບວິໄສທັດ 20 ປີ (2021-2040), ຍຸດທະສາດ 10 ປີ (2021-2030) ແລະ ແຜນພັດທະນາເສດຖະກິດດີຈີຕອນ ແຫ່ງຊາດ 5 ປີ (2021-2025); ມະຕິວ່າດ້ວຍການຮັບຮອງເອົາຜົນການກວດສອບບົດສະຫລຸບຂາດຕົວ ງົບປະມານແຫ່ງລັດ ແລະ ຜົນການກວດສອບປະຈຳປີ 2020, ບົດສະຫລຸບການເຄື່ອນໄຫວວຽກງານປະຈຳປີ 2021 ແລະ ແຜນປະຈຳປີ 2022 ຂອງອົງການກວດສອບແຫ່ງລັດ; ບົດລາຍງານຜົນການກວດກາຕາມຜົນການກວດສອບ ປະຈຳປີ 2019, ບົດສະຫລຸບການເຄື່ອນໄຫວວຽກງານປະຈຳປີ ແລະ ທິດທາງແຜນການຂອງອົງການກວດສອບແຫ່ງລັດ; ອົງການໄອຍະການປະຊາຊົນສູງສຸດ; ສານປະຊາຊົນສູງສຸດ; ການແຕ່ງຕັ້ງສະມາຊິກສະພາຜູ້ພິພາກສາຂອງສານປະຊາຊົນສູງສຸດ ແລະ ຮັບຮອງເອົາກົດໝາຍຈຳນວນ 11 ສະບັບ.

ການພິຈາລະນາ ແລະ ຮັບຮອງເອົາເນື້ອໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ

ອ່ານຕໍ່ໜ້າ 2

## ສນສ ເກັບກຳຂໍ້ມູນເນື້ອໃນການເຝິກອົບຮົມ ແລະ ສະໜອງຂໍ້ມູນ-ຂ່າວສານ



(ສພຊ) ວັນທີ 12 ມັງກອນ 2022, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຊຽງຂວາງ ໄດ້ມີກອງປະຊຸມເກັບກຳຂໍ້ມູນເນື້ອໃນການເຝິກອົບຮົມ ແລະ ສະໜອງຂໍ້ມູນ-ຂ່າວສານ ຂອງສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ (ສນສ) ໂດຍການເປັນປະທານຮ່ວມຂອງທ່ານ ຢ່າງກູ້ ຢ່າງລືໄຊ ຫົວໜ້າ ສນສ ແລະ ທ່ານ ວຽງໄຊ ສີວິໄລ ຮອງປະທານ ສພຂ; ມີຄະນະປະຈຳສະພາປະຊາຊົນແຂວງ, ປະທານ-ຮອງປະທານຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານ-ລັດຖະກອນພາຍໃນ ສພຂ ເຂົ້າຮ່ວມ.

ທັງນີ້, ເພື່ອເປັນການສຳຫລວດຄວາມຕ້ອງການໃນການເຝິກອົບຮົມ, ຂໍ້ມູນ-ຂ່າວສານ ຂອງສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ທັງເປັນການກຳນົດທິດທາງ ແລະ ຂຶ້ນແຜນເຝິກອົບຮົມຍົກຂີດຄວາມສາມາດດ້ານຕ່າງໆ ໃຫ້ແກ່ ສສຊ ຊຸດທີ IX ແລະ ສສຂ ຊຸດທີ II.

ໃນກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ຮັບຟັງການລາຍງານສະພາບການຈັດຕັ້ງປະຕິບັດກ່ຽວກັບການເຄື່ອນໄຫວເກັບກຳຂໍ້ມູນໃນການເຝິກອົບຮົມ ແລະ ສະໜອງຂໍ້ມູນ-ຂ່າວສານ ໂດຍສະເພາະແມ່ນການເຝິກອົບຮົມ-ສຳມະນາໃນໄລຍະຜ່ານມາ ໂດຍໃຫ້ຮູ້ວ່າ ນອກຈາກສະພາແຫ່ງຊາດຈັດຂຶ້ນແລ້ວ ສພຂ ຍັງໄດ້ນຳໃຊ້ເງິນຮ່ວງສິ່ງເສີມວິຊາການ

ອ່ານຕໍ່ໜ້າ 2

## ສພຂ ອັດຕະປື ເປີດກອງປະຊຸມສະໄໝສາມັນເທື່ອທີ 2



(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນແຂວງ (ສພຂ) ອັດຕະປື ຊຸດທີ II ໄດ້ໄຂຂຶ້ນຢ່າງເປັນທາງການໃນຕອນເຊົ້າວັນທີ 19 ມັງກອນ 2022 ທີ່ຫ້ອງປະຊຸມໃຫຍ່ຂອງແຂວງ ໂດຍການເປັນປະທານຂອງທ່ານນາງ ມີນາພອນ ໄຊສົມພູ ປະທານ ສພຂ, ເຂົ້າຮ່ວມມີທ່ານ ເລັດ ໄຊຍະພອນ ເຈົ້າແຂວງໆອັດຕະປື, ມີບັນດາຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 17, ສະມາຊິກສະພາປະຊາຊົນແຂວງ (ສສຂ), ອະດີດການນຳພັກ-ລັດແຂວງ, ບັນດາທ່ານນັກປະຕິວັດອາວຸໂສ, ຜູ້ຊົງຄຸນວຸດທິ, ອົງການຈັດຕັ້ງມະຫາຊົນ, ນັກທຸລະກິດ ແລະ ແຂກຖືກເຊີນເຂົ້າຮ່ວມ.

ທ່ານ ນາງ ມີນາພອນ ໄຊສົມພູ ໄດ້ກ່າວສູນທອນພົດໄຂກອງປະຊຸມວ່າ: ປີ 2021 ເປັນປີທຳອິດທີ່ ສພຂ ຊຸດທີ II ໄດ້ສຸມໃສ່ເຄື່ອນໄຫວຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງອົງຄະນະພັກແຂວງອັດຕະປື ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ກຳນົດໄວ້ໃນລັດຖະທຳມະນູນ ແຫ່ງ ສປປລາວ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ໃນທ່າມກາງທີ່ສະພາບການຂອງພາກພື້ນ ແລະ ສາກົນ ຍັງສືບຕໍ່ຜັນແປໄປຢ່າງສະຫລັບສັບຊ້ອນ, ເຄັ່ງຮ້ອນ ແລະ ມີຄວາມຫລໍ່ແຫລມຫລາຍດ້ານ ທີ່ຄາດຄະເນໄດ້ຍາກ, ບວກກັບການແຜ່ລະບາດຂອງພະຍາດໂຄວິດ-19 ມີທ່າອ່ຽງແກ່ຍາວ ແລະ ເປັນວົງກວ້າງ ເຊິ່ງໄດ້ສົ່ງຜົນກະທົບຕໍ່ບັນດາປະເທດຕ່າງໆໃນໂລກ, ລວມທັງ ສປປລາວ ຂອງພວກເຮົາ. ສຳລັບແຂວງອັດຕະປືກໍຄ້າຍກັບແຂວງອື່ນໆໃນຂອບເຂດທົ່ວປະເທດ ເຊິ່ງລ້ວນແຕ່ໄດ້ຮັບຜົນກະທົບຈາກວິກິດການແຜ່ລະບາດຂອງພະຍາດໂຄວິດ-19 ໄດ້ສົ່ງຜົນກະທົບທາງກົງ ແລະ ທາງອ້ອມ ຕໍ່ການພັດທະນາເສດຖະກິດ-ສັງຄົມຂອງແຂວງ, ເຮັດໃຫ້ການເຕີບໂຕເສດຖະກິດ ບໍ່ບັນລຸຕາມແຜນການທີ່ວາງໄວ້, ການຄ້າ ແລະ ການຜະລິດ ມີທ່າອ່ຽງຫລຸດລົງ, ລາຄາສິນຄ້າອຸປະໂພກ-ບໍລິໂພກໃນທ້ອງຕະຫລາດເພີ່ມສູງຂຶ້ນ. ເຖິງຢ່າງໃດກໍຕາມ ໃນໄລຍະ 1

ອ່ານຕໍ່ໜ້າ 3

## ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ໄຊສົມບູນ ຊຸດທີ II



(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນແຂວງ (ສພຂ) ໄຊສົມບູນ ຊຸດທີ II ໄດ້ຈັດຂຶ້ນລະຫວ່າງວັນທີ 17-18 ມັງກອນຜ່ານມາ, ທີ່ສະໂມສອນເມືອງອະນຸວົງ ໂດຍການເປັນປະທານຂອງທ່ານ ແດງ ປະທຸມທອງ ປະທານ ສພຂ ໄຊສົມບູນ, ເຂົ້າຮ່ວມມີທ່ານ ຄຳລຽງ ອຸທະໄກສອນ ເຈົ້າແຂວງໆໄຊສົມບູນ; ມີຄະນະປະຈຳ ສພຂ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ (ສສຂ), ມີຄະນະພັກ-ຄະນະນຳແຂວງ, ບັນດາພະແນກການ, ອົງການລັດທຽບເທົ່າພະແນກ, ອົງການຈັດຕັ້ງມະຫາຊົນ, ແນວລາວສ້າງຊາດແຂວງ, ກົມກອງ, ພະນັກງານບຳນານ, ຜູ້ຊົງຄຸນວຸດທິ, ນາຍບ້ານອ້ອມຂ້າງເທສະບານແຂວງ ແລະ ແຂກຖືກເຊີນ.

ກອງປະຊຸມ ໄດ້ຮັບຟັງບົດລາຍງານຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ປະຈຳປີ 2021 ແລະ

ອ່ານຕໍ່ໜ້າ 3

## ຮອງປະທານ...




ສພຊ ຊຸດທີ IX ເປັນການຈັດຕັ້ງຜັນຂະຫຍາຍເນື້ອໃນກອງປະຊຸມຄົບຄະນະບໍລິຫານງານສູນກາງພັກຄັ້ງທີ 3 ສະໄໝທີ XI ໂດຍການຈັດຕັ້ງປະຕິບັດພາລະບົດບາດຂອງສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໃນລັດຖະທຳມະນູນ ແລະ ກົດໝາຍ ໂດຍສະເພາະແມ່ນ ການພິຈາລະນາ ແລະ ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ເຊິ່ງເປັນການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກເຂົ້າໃນການສ້າງລັດທີ່ປົກຄອງດ້ວຍກົດໝາຍໃຫ້ເປັນຮູບປະທຳ ແລະ ທັນເຂົ້າສູ່ວຽກງານຕົວຈິງເທື່ອລະກ້າວ ເຮັດໃຫ້ການຄຸ້ມຄອງລັດ ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍນັບມື້ເປັນລະບົບຄົບຊຸດ, ທັນປ່ຽນຢ່າງແຂງແຮງ ແລະ ມີປະສິດທິຜົນ; ການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ເປັນການປະກອບສ່ວນເຮັດໃຫ້ປະເທດຊາດມີສະຖຽນລະພາບທາງດ້ານການເມືອງທີ່ໜັກແໜ້ນ, ສັງຄົມມີຄວາມສະຫງົບໂດຍພື້ນຖານ, ເສດຖະກິດສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ; ການພິຈາລະນາ ຮັບຮອງເອົາວຽກງານກວດສອບແຫ່ງລັດ-ກວດກາແຫ່ງລັດ ເປັນການກະຕຸກຊຸກຍູ້ການປະຕິບັດກົດໝາຍ ໃຫ້ມີຄວາມເຂັ້ມງວດ, ແກ້ໄຂການລະເມີດວິໄນແຜນການ-ການເງິນ, ເກັບກູ້ງົບປະມານຊັບສິນຂອງລັດ; ການພິຈາລະນາ ຮັບຮອງເອົາການເຄື່ອນໄຫວຂອງວຽກງານສານ-ໄອຍະການປະຊາຊົນໄດ້ເປັນການຍົກສູງຄຸນນະພາບ ໃນການດຳເນີນຄະດີຕາມຂະບວນຍຸຕິທຳນັບມື້ສູງຂຶ້ນ, ເປັນການປັບປຸງກົງຈັກການຈັດຕັ້ງ, ບຸກຄະລາກອນຂອງອົງການຕຸລາການໃຫ້ເປັນລະບົບຄົບຊຸດ ແລະ ເຂັ້ມແຂງຂຶ້ນ; ການຊຸກຍູ້, ຕິດຕາມ, ກວດກາການປະຕິບັດລັດຖະທຳມະນູນ-ກົດໝາຍ ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍດີຂຶ້ນ.

ໃນໂອກາດນີ້ ທ່ານ ບຸນມີ ພິມມະສອນ ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ ແລະ ທ່ານ ໄຊນະຄອນ ອິນທະວົງ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 12 ກໍໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ກ່ຽວກັບການຮັບຮອງເອົາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ການຮັບຮອງເອົາກົດໝາຍຈຳນວນ 11 ສະບັບ ຕາມລຳດັບ.

ໂອກາດດັ່ງກ່າວ, ທ່ານຮອງປະທານ ສພຊ ພ້ອມດ້ວຍຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ ຍັງໄດ້ນຳເອົາເຄື່ອງນຸ່ງຫົ່ມ ແລະ ອຸປະກອນການຮຽນຈຳນວນໜຶ່ງ ລວມມູນຄ່າ 70 ລ້ານກວ່າກີບ ມອບໃຫ້ແຂວງຄຳມ່ວນ ເພື່ອນຳໄປແຈກຢາຍຕໍ່ໃຫ້ຜູ້ທີ່ທຸກຍາກຂາດເຂີນ.

(ເອື້ອ ມະໂນສິງ)

## ສນສ...



ແລະ ໄດ້ຮັບການຊ່ວຍເຫລືອທາງດ້ານງົບປະມານຈາກໂຄງການສາກົນ ໃນການຈັດຝຶກອົບຮົມໃຫ້ແກ່ ສສຊ ແລະ ສສຂ, ພະນັກງານ-ລັດຖະກອນ ຂອງ ສພຂ ແລະ ພະນັກງານຊ່ວຍວຽກ ສສຂ ຢູ່ຂັ້ນເມືອງ; ວຽກງານສະໜອງຂໍ້ມູນ-ຂ່າວສານມີການຕິດພັນກັບເນື້ອໃນ, ຮູບການ ແລະ ວິທີການສະໜອງຂໍ້ມູນ-ຂ່າວສານ, ການສ້າງນິຕິກຳໃຕ້ກົດໝາຍໃນໄລຍະຜ່ານມາແມ່ນໄດ້ອີງໃສ່ກົດໝາຍວ່າດ້ວຍການສ້າງນິຕິກຳຂັ້ນທ້ອງຖິ່ນເປັນບ່ອນອີງ ໃນການຈັດຕັ້ງປະຕິບັດ ແລະ ມີບາງອັນກໍໄດ້ໝູນໃຊ້ຕາມຄວາມເປັນຈິງຂອງສະພາບແວດລ້ອມຢູ່ທ້ອງຖິ່ນ; ພ້ອມນັ້ນ, ຍັງມີຄຳເຫັນແລກປ່ຽນເຊິ່ງກັນ ແລະ ກັນ ລະຫວ່າງ ສພຂ ກັບ ສນສ ໃຫ້ມີຄວາມເຫັນດີເປັນເອກະພາບກັນ ເພື່ອສະດວກໃນການຈັດຕັ້ງປະຕິບັດວຽກງານຕົວຈິງ.

ກ່ອນໜ້ານັ້ນ, ໃນວັນທີ 5 ມັງກອນ 2022, ທີ່ຫ້ອງປະຊຸມຂອງຫ້ອງວ່າການແຂວງໄຊສົມບູນ ຫລັງເກົ່າ, ທ່ານ ສາຍອູ ພູມສາລີ ຮອງຫົວໜ້າ ສນສ ໄດ້ເຄື່ອນໄຫວເຮັດວຽກຮ່ວມກັບ ສພຂ ໄຊສົມບູນ ຕໍ່ກັບວຽກງານດັ່ງກ່າວ ໂດຍການຕ້ອນຮັບຂອງທ່ານ ຄຳພູທອນ ວົງພະຈັນ ຮອງປະທານ ສພຂ.

ໃນກອງປະຊຸມ ໄດ້ຮັບຟັງບົດລາຍງານກ່ຽວກັບແຜນການສ້າງຄວາມເຂັ້ມແຂງ 5 ປີ (2021-2025) ຂອງ ສພຂ ໄຊສົມບູນ ຊຸດທີ II; ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ ແລະ ມະຕິກອງປະຊຸມ ສພຂ ໄຊສົມບູນ ວ່າດ້ວຍການຮັບຮອງເອົາບົດລາຍງານທິດທາງແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ຂອງ ສພຂ ໄຊສົມບູນ ຊຸດທີ II ໃຫ້ປາກົດຜົນເປັນຈິງ; ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ ສສຊ ປະຈຳເຂດເລືອກຕັ້ງ, ສສຂ ແລະ ພະນັກງານ-ລັດຖະກອນ ໃນການປະຕິບັດພາລະບົດບາດ ສພຂ ເພື່ອເຮັດໃຫ້ແຜນການເຄື່ອນໄຫວ5ປີ(2021-2025) ຂອງ ສພຂ ໄຊສົມບູນ ຊຸດທີ II ໄດ້ຮັບການຈັດຕັ້ງປະຕິບັດຕາມລະດັບຄາດໝາຍທີ່ວາງໄວ້ຕື່ມອີກ.

(ນາງ ສຸກສະຫວັນ ອິນທະແສງ ແລະ ນາງ ອຳໄພພອນ ແກ້ວວິໄລ)






## ສພຂ ອັດຕະປື...



ປີຜ່ານມາ, ພາຍໃຕ້ການນຳພາ-ຊີ້ນຳຂອງອົງຄະນະບໍລິຫານງານພັກແຂວງ, ບັນດາອົງການຈັດຕັ້ງລັດທຸກຂັ້ນ ກໍຄືປະຊາຊົນລາວບັນດາເຜົ່າໃນຂອບເຂດທົ່ວແຂວງ, ທີ່ມີຄວາມພະຍາຍາມສູ້ຊົນຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານປະຈຳປີ 2021 ເຊິ່ງສາມາດບັນລຸຄາດໝາຍທາງດ້ານເສດຖະກິດມະຫາພາກຈຳນວນໜຶ່ງ, ສາມາດຮັບປະກັນເຮັດໃຫ້ການພັດທະນາແຂວງອັດຕະປືສືບຕໍ່ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ປະຊາຊົນບັນດາເຜົ່າມີຄວາມສາມັກຄີປອງດອງ, ເສດຖະກິດ-ສັງຄົມມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ດ້ວຍສະພາບແວດລ້ອມທີ່ເຮັດໃຫ້ບາງວຽກງານ ຍັງເຫັນວ່າບໍ່ທັນໄດ້ພິຈາລະນາ, ຮັບຮອງເອົາຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ. ສະນັ້ນ, ກອງປະຊຸມຄັ້ງນີ້ ແມ່ນຈະໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຕົກລົງຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງເຊັ່ນ:

1) ພິຈາລະນາ ແລະ ຮັບຮອງເອົາບົດລາຍງານ ຂອງທ່ານເຈົ້າແຂວງອັດຕະປື ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII, ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 5 ປີ (2016-2020) ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX, ແຜນງົບປະມານແຫ່ງລັດ 5 ປີ (2021-2025) ຂອງແຂວງອັດຕະປື;

2) ພິຈາລະນາ ແລະ ຮັບຮອງເອົາບົດລາຍງານ ຂອງທ່ານເຈົ້າແຂວງອັດຕະປື ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂັ້ນແຂວງປະຈຳປີ 2021 ແລະ ທິດທາງແຜນການປະຈຳປີ 2022 ຂອງແຂວງອັດຕະປື;

3) ພິຈາລະນາ ແລະ ຮັບຮອງເອົາບົດລາຍງານ ຂອງອົງການກວດສອບປະຈຳພາກໃຕ້ ກ່ຽວກັບຜົນການກວດສອບບົດສະຫລຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ຜົນການກວດສອບປະຈຳປີ 2020; ບົດສະຫລຸບການເຄື່ອນໄຫວວຽກງານປະຈຳປີ 2021 ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີ 2022;

4) ພິຈາລະນາ ແລະ ຮັບຮອງເອົາບົດລາຍງານ ຂອງອົງການກວດກາລັດແຂວງ ກ່ຽວກັບຜົນການກວດກາ ຕາມຜົນການກວດສອບປະຈຳປີ 2019, ບົດລາຍງານການເຄື່ອນໄຫວວຽກງານປະຈຳປີ 2021 ແລະ ທິດທາງແຜນການປະຈຳປີ 2022;

5) ພິຈາລະນາ ແລະ ຮັບຮອງເອົາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດເຄື່ອນໄຫວວຽກງານ 5 ປີ (2016-2020); ການຈັດຕັ້ງປະຕິບັດເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການ 5 ປີ (2021-2025); ທິດທາງແຜນການປະຈຳປີ 2022 ຂອງອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ;

6) ພິຈາລະນາ ແລະ ຮັບຮອງເອົາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການປະຈຳປີ 2022 ຂອງສະພາປະຊາຊົນແຂວງ;

7) ຮັບຟັງການປະກອບຄຳເຫັນຂອງອົງການແນວລາວສ້າງຊາດແຂວງ ຕໍ່ບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການປະຈຳປີ 2022 ຂອງສະພາປະຊາຊົນແຂວງ;

8) ພິຈາລະນາຮັບຮອງເອົາການສ້າງ ແລະ ປັບປຸງນິຕິກຳທີ່ສຳຄັນຂອງແຂວງເປັນຕົ້ນ: ຮ່າງແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານຂອງແຂວງອັດຕະປື, ຮ່າງຂໍ້ຕົກລົງ ຂອງທ່ານເຈົ້າແຂວງ ວ່າດ້ວຍກອງທຶນຊ່ວຍເຫລືອເຊິ່ງກັນ ແລະ ກັນ ຂອງສະຫະພັນກຳມະບານແຂວງອັດຕະປື.

ພ້ອມນັ້ນ, ຍັງຈະໄດ້ມີການຊີ້ແຈງບາງບັນຫາ ຂອງພະແນກແຜນການ ແລະ ການລົງທຶນແຂວງ, ພະແນກການເງິນແຂວງ ທີ່ຕິດພັນກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂັ້ນແຂວງ ປະຈຳປີ 2021 ແລະ ທິດທາງແຜນການປະຈຳປີ 2022 ແລະ ຮັບຟັງການລາຍງານຂອງພາກສ່ວນກ່ຽວຂ້ອງ ທີ່ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ; ການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາຢາເສບຕິດແຕ່ປີ 2021-2023; ການຈັດຕັ້ງປະຕິບັດວຽກງານຕ້ານ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ແຂວງອັດຕະປື.

ປະທານ ສພຂ ຍັງໄດ້ກ່າວຕື່ມວ່າ: ຮຽກຮ້ອງມາຍັງບັນດາທ່ານສະມາຊິກສະພາປະຊາຊົນແຂວງ ຈົ່ງໄດ້ນຳໃຊ້ສິດປະຊາທິປະໄຕ, ຍົກສູງຄວາມຮັບຜິດຊອບການເມືອງ, ສຸມສະຕິປັນຍາ, ຄວາມຮູ້ຄວາມສາມາດຂອງຕົນໃນການຄົ້ນຄວ້າ, ປະກອບຄຳເຫັນສຸມໃສ່ຕໍ່ທຸກບັນຫາຢ່າງຖີ່ຖ້ວນ, ພາວະວິໄສ, ເລິກເຊິ່ງ ແລະ ມີຈຸດສຸມ, ບົນພື້ນຖານແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ສະພາບຄວາມເປັນຈິງທາງດ້ານເສດຖະກິດ-ສັງຄົມຂອງທ້ອງຖິ່ນ, ແນໃສ່ຮັບປະກັນເຮັດໃຫ້ເນື້ອໃນທີ່ນຳມາພິຈາລະນາ ແລະ ຮັບຮອງ, ສາມາດນຳໄປຈັດຕັ້ງປະຕິບັດຢ່າງເປັນຮູບປະທຳ ແລະ ບັນລຸຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.

(ວິນັດ ສພຂ)

## ກອງປະຊຸມ...

ທິດທາງແຜນການ ປະຈຳປີ 2022 ຂອງແຂວງ; ບົດລາຍງານການຈັດຕັ້ງປະຕິບັດວຽກງານການແກ້ໄຂຄວາມທຸກຍາກຂອງແຂວງ; ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022 ຂອງອົງການກວດສອບປະຈຳພາກກາງ ແລະ ຜົນການກວດສອບບົດສະຫລຸບຂາດຕົວ, ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2020 ຂອງແຂວງ; ບົດລາຍງານຂອງອົງການກວດກາລັດແຂວງ ກ່ຽວກັບການຕິດຕາມຊຸກຍູ້ການແກ້ໄຂຜົນການກວດກາ ຕາມຜົນກວດສອບ ສົກປີ 2014-2015, 2015-2016 ແລະ ປີ 2017; ບົດລາຍງານຂອງອົງການໄອຍະການປະຊາຊົນແຂວງ ກ່ຽວກັບການຈັດຕັ້ງເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022; ບົດລາຍງານຂອງສານປະຊາຊົນແຂວງ ກ່ຽວກັບການຈັດຕັ້ງເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022.

ພ້ອມນັ້ນ, ກອງປະຊຸມຍັງໄດ້ຮັບຟັງບົດລາຍງານຂອງຄະນະປະຈຳສະພາປະຊາຊົນແຂວງກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ພິຈາລະນາ ຮັບຮອງເອົາທິດທາງແຜນການ ປະຈຳປີ 2022 ຂອງສະພາປະຊາຊົນແຂວງໄຊສົມບູນ ຊຸດທີ II ຄື: ຮັບຟັງການລາຍງານ ຂອງຄະນະປະຈຳສະພາປະຊາຊົນແຂວງ ກ່ຽວກັບການຈັດຕັ້ງເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງ ປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022.



ພາຍຫລັງທີ່ໄດ້ຮັບຟັງບົດລາຍງານຂອງຄະນະປະຈຳ ສພຂ, ກອງປະຊຸມຍັງໄດ້ຮັບຟັງການປະກອບຄຳເຫັນຂອງແນວລາວສ້າງຊາດແຂວງ ຕໍ່ບົດລາຍງານຂອງຄະນະປະຈຳສະພາປະຊາຊົນແຂວງ ໂດຍທ່ານ ສີລັດ ພານຸວົງ ຮອງປະທານແນວລາວສ້າງຊາດແຂວງ. ຈາກນັ້ນ, ບັນດາທ່ານ ສສຂ ກໍໄດ້ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງວຽກງານຈຸດສຸມປະຈຳປີ 2022 ຂອງສະພາປະຊາຊົນແຂວງໄຊສົມບູນ ຊຸດທີ I.

ຈາກນັ້ນ, ກອງປະຊຸມໄດ້ສະເໜີຮ່າງມະຕິ ຄື: ສະເໜີຮ່າງມະຕິກອງປະຊຸມ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022; ສະເໜີຮ່າງມະຕິກອງປະຊຸມ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022 ຂອງແຂວງໄຊສົມບູນ; ສະເໜີຮ່າງມະຕິກອງປະຊຸມວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022 ຂອງອົງການກວດສອບປະຈຳພາກກາງ ແລະ ຜົນການກວດສອບບົດສະຫລຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2020 ຂອງແຂວງໄຊສົມບູນ ແລະ ບົດລາຍງານຂອງອົງການກວດກາລັດແຂວງ ກ່ຽວກັບການຕິດຕາມ ຊຸກຍູ້ການແກ້ໄຂຜົນການກວດກາ ຕາມຜົນກວດສອບ ສົກປີ 2014-2015-2016-2017 ແລະ ຜ່ານຮ່າງມະຕິ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດວຽກງານແກ້ໄຂຄວາມທຸກຍາກຂອງແຂວງໄຊສົມບູນ.

ພ້ອມດຽວກັນນັ້ນ, ບັນດາທ່ານ ສສຊ, ສສຂ ກໍໄດ້ປະກອບຄຳຄິດຄຳເຫັນ ແລະ ລົງຄະແນນສຽງຮັບຮອງເອົາ ບັນດາມະຕິຕ່າງໆ ຕາມການສະເໜີດ້ວຍຄະແນນສຽງເຫັນດີເປັນສ່ວນຫລາຍ. ກອງປະຊຸມໄດ້ດຳເນີນເປັນເວລາ 2 ວັນ ແລະ ໄດ້ອັດລົງດ້ວຍຜົນສຳເລັດຢ່າງຈົບງາມ ຕາມເປົ້າໝາຍທີ່ວາງໄວ້.

(ນາງ ອຳໄພພອນ ແກ້ວວິໄລ)



# ກອງປະຊຸມຄົບຄະນະກຳມະການ ຂອງ ສພຂ ວຽງຈັນ ປະຈຳປີ 2021



(ສພຊ) ກອງປະຊຸມຄົບຄະນະ ປະຈຳປີ 2021 ຂອງຄະນະກຳມະການ (ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ, ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ) ສະພາປະຊາຊົນແຂວງ (ສພຂ) ວຽງຈັນ ຊຸດທີ II ໄດ້ໄຂຂຶ້ນໃນວັນທີ 17 ມັງກອນຜ່ານມາ, ທີ່ຫ້ອງປະຊຸມ ສພຂ ວຽງຈັນ ໂດຍການເປັນປະທານຮ່ວມຂອງ ທ່ານ ບຸນສອນ ເພັດລາວັນ ປະທານ ສພຂ ວຽງຈັນ; ທ່ານ ລຳໄມ ກູດລາວົງ ຮອງປະທານ ສພຂ ທັງເປັນປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ; ທ່ານ ນາງ ຈັນທະຄອນ ສີອຳພອນ ຮອງປະທານ ສພຂ ທັງເປັນປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ທ່ານ ບຸນນຳ ຈັນທອງສີ ປະທານຄະນະກຳມະການຍຸຕິທຳ ປກຊ-ປກສ ສພຂ ວຽງຈັນ; ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ ທີ່ສັງກັດໃນແຕ່ລະຄະນະກຳມະການ, ຮອງເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງເຂົ້າຮ່ວມ

ກອງປະຊຸມໄດ້ຮັບຟັງການຜ່ານບົດສະຫລຸບຕີລາຄາການເຄື່ອນໄຫວວຽກງານປະຈຳປີ 2021 ແລະ ທິດທາງແຜນການເຄື່ອນໄຫວປີ 2022 ຂອງຄະນະກຳມະການ ໃນ ສພຂ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ພ້ອມກັນຄົ້ນຄວ້າປະກອບຄຳຄິດ-ຄຳເຫັນ ເຖິງດ້ານດີ-ດ້ານອ່ອນ, ຂໍ້ຄົງຄ້າງ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃນໄລຍະຜ່ານມາ ລວມໄປເຖິງຄາດຄະເນແຜນການຈຸດສຸມປີ 2022 ທີ່ຈະຕ້ອງໄດ້ສືບຕໍ່ຈັດຕັ້ງປະຕິບັດໃນຕໍ່ໜ້າ.

ຕອນທ້າຍ, ຍັງໄດ້ຮັບຟັງການໂອ້ລົມຈາກ ທ່ານ ບຸນສອນ ເພັດລາວັນ ເຊິ່ງທ່ານສະແດງຄວາມຍ້ອງຍໍຊົມເຊີຍຕໍ່ບັນດາຜູ້ແທນທີ່ໄດ້ຍົກສູງຄວາມຮັບຜິດຊອບການເມືອງ ເຂົ້າໃນການຄົ້ນຄວ້າປະກອບຄຳເຫັນໃສ່ບົດສະຫລຸບ ຂອງຄະນະກຳມະການ ສພຂ; ພ້ອມນັ້ນ, ທ່ານຍັງໄດ້ເນັ້ນໜັກໃຫ້ເອົາໃຈໃສ່ເພີ່ມທະວີການພົວພັນປະສານງານໃຫ້ກົມກຽວກັນລະຫວ່າງບັນດາຄະນະກຳມະການດ້ວຍກັນ, ຄະນະກຳມະການກັບຂະແໜງການທີ່ກ່ຽວຂ້ອງຂອງແຂວງ-ເມືອງ ໃນການແລກປ່ຽນສະໜອງຂໍ້ມູນຂ່າວສານ; ສຸມໃສ່ຜັນຂະຫຍາຍບັນດານິຕິກຳ, ກົດໝາຍ ລະບຽບການຕ່າງທີ່ໄດ້ຮັບຮອງ ແລະ ວາງອອກໃນໄລຍະຜ່ານມາທັງສືບຕໍ່ປັບປຸງແບບແຜນວິທີການເຮັດວຽກ ໃຫ້ມີຄຸນນະພາບອັນໃໝ່ ບົນພື້ນຖານການປັບປຸງກົງຈັກໃໝ່, ສືບຕໍ່ເອົາໃຈໃສ່ສູ້ຊົນຈັດຕັ້ງປະຕິບັດບັນດາຄາດໝາຍທີ່ຍັງບໍ່ທັນບັນລຸ.



# ຄະນະນຳ ສພຂ ສາລະວັນ ຢ້ຽມຢາມ ແລະ ອວຍພອນ ນາຍ ແລະ ພົນທະຫານ

(ສພຊ) ວັນທີ 18 ມັງກອນ 2022, ທ່ານ ສີເຮັງ ຫອມສົມບັດ ປະທານສະພາປະຊາຊົນແຂວງ (ສພຂ) ສາລະວັນ ແລະ ທ່ານ ແຫວນເພັດ ລັດດາວົງ ຫົວໜ້າຄະນະຈັດຕັ້ງແຂວງ ພ້ອມດ້ວຍຄະນະນຳຂອງເມືອງ, ຕາງໜ້າຈາກພະແນກອຸດສາຫະກຳ ແລະ ການຄ້າແຂວງ, ພະແນກພາຍໃນແຂວງ, ໄອຍະການປະຊາຊົນແຂວງ, ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ, ທະນາຄານ JDB, ບໍລິສັດສະຕາໂທລະຄົມສາຂາແຂວງສາລະວັນ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ອວຍພອນນາຍ ແລະ ພົນທະຫານ ກອງພັນ 17 ບ້ານຫີນສິ່ວ ເມືອງຄົງເຊໂດນ ແຂວງສາລະວັນ ເນື່ອງໃນໂອກາດວັນສ້າງຕັ້ງກອງທັບປະຊາຊົນລາວຄົບຮອບ 73 ປີ ( 20 ມັງກອນ 1949-20 ມັງກອນ 2022 ) ໂດຍການຕ້ອນຮັບຂອງທ່ານ ພັທ ບຸນຖອງ ມູນມະຖັນ ຫົວໜ້າກອງພັນ 17 ພ້ອມດ້ວຍນາຍ ແລະ ພົນທະຫານພາຍໃນກອງພັນ.



ໃນການຢ້ຽມຢາມຄັ້ງນີ້, ໄດ້ຮັບຟັງການລາຍງານສະພາບລວມໂດຍຫຍໍ້ ກ່ຽວກັບການຈັດຕັ້ງປະຕິບັດໜ້າທີ່ວຽກງານພາຍໃນກອງພັນ ໃນໄລຍະຜ່ານມາ; ພ້ອມນັ້ນ, ທ່ານ ສີເຮັງ ຫອມສົມບັດ ໃນນາມຕາງໜ້າຄະນະພັກຄະນຳຂອງແຂວງ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ໝາກຜົນ ແລະ ຜົນງານທີ່ຍາດມາໄດ້ ທັງສະແດງຄວາມຮູ້ບຸນຄຸນຕໍ່ຄຸນງາມຄວາມດີຂອງນາຍ ແລະ ພົນທະຫານທີ່ໄດ້ປະກອບສ່ວນເຂົ້າໃນການຕໍ່ສູ້ກູ້ຊາດ ທີ່ໄດ້ກາຍເປັນການປະກອບສ່ວນອັນໃຫຍ່ຫລວງເຂົ້າໃນການສ້າງສາພັດທະນາປະເທດຊາດ ກໍຄືແຂວງ; ພ້ອມນັ້ນ, ທ່ານຍັງໄດ້ເນັ້ນໜັກໃຫ້ເອົາໃຈໃສ່ບັນຫາທີ່ສຳຄັນຄື: ເອົາໃຈໃສ່ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ສຶກສາອົບຮົມການເມືອງ-ແນວຄິດ, ແນວທາງນະໂຍບາຍຂອງພັກ ໃຫ້ພະນັກງານນັກຮົບເຊື່ອມຊຶມຢ່າງເລິກເຊິ່ງເຖິງຖອງ, ມີການຕຳນິສິ່ງຂ່າວກໍ່ສ້າງຊ່ວຍເຫລືອເຊິ່ງກັນ ແລະກັນຢ່າງເປັນປົກກະຕິ, ຍົກສູງຄຸນນະພາບແບບແຜນວິທີເຮັດວຽກ, ຍຶດຖືຫລັກການລວມສູນປະຊາທິປະໄຕ ເຮັດວຽກເປັນໝູ່ຄະນະ ແບ່ງຄວາມຮັບຜິດຊອບໃຫ້ແຕ່ລະບຸກຄົນ, ເອົາໃຈໃສ່ໃນການແກ້ໄຂຊີວິດເພີ່ມທະວີເປັນກ້າວໆ.

ໃນໂອກາດດຽວກັນ, ທ່ານຍັງໄດ້ມອບວັດຖຸ (ປູນຊີເມັນ) ຈຳນວນ 5 ໂຕນ ມູນຄ່າ 4 ລ້ານກີບ ທີ່ໄດ້ຈາກການລະດົມທັງພາກລັດ ແລະ ເອກະຊົນ ເພື່ອເປັນການປະກອບສ່ວນຊ່ວຍສົມທົບທຶນກໍ່ສ້າງ ແລະ ບູລະນະສ້ອມແປງອາຄານຫ້ອງການ, ສະໂມສອນ ແລະອື່ນໆ ຕາມຄວາມເໝາະສົມ.



ຕິທຳ, ຄະນະເລຂາທິການສະພາປະຊາຊົນແຂວງ ໄດ້ເຄື່ອນໄຫວຢ້ຽມຢາມກອງຮ້ອຍຊາຍແດນ 512 ທີ່ເມືອງລະຄອນເພັງ ໂດຍການຕ້ອນຮັບຂອງທ່ານ ພັນໂທ ໜູກອນ ພົມມະແສງ ຮອງຫ້ອງເສນາທະຫານແຂວງສາລະວັນ ພ້ອມດ້ວຍຄະນະພັກ-ຄະນະບັນຊາກອງຮ້ອຍຊາຍແດນ, ພະນັກງານ-ນັກຮົບກອງຮ້ອຍຊາຍແດນ 512.

ໃນການຢ້ຽມຢາມຄັ້ງນີ້, ທ່ານ ຂັນໄຊ ລັດຖະເຮົ້າ ໄດ້ເນັ້ນໜັກໃຫ້ຄະນະພັກ-ຄະນະບັນຊາ, ພະນັກງານ-ນັກຮົບກອງຮ້ອຍຊາຍແດນ 512 ຈົ່ງສືບຕໍ່ໃນການສຶກສາອົບຮົມການເມືອງ-ແນວຄິດຢ່າງແຂງແຮງ, ຕັ້ງໜ້າປັບປຸງກອງຮ້ອຍໃຫ້ມີຄວາມເຂັ້ມແຂງຮອບດ້ານ, ສືບຕໍ່ເປັນກຳລັງຫລັກແໜ້ນແກ່ນໃນການປົກປັກຮັກສາເຂດນ້ຳແດນດິນທີ່ແສນຮັກໄວ້ໃຫ້ໝັ້ນຄົງ ເຮັດໃຫ້ສະພາບພື້ນທີ່ມີຄວາມສະຫງົບປອດໄພ; ພ້ອມນັ້ນ, ທ່ານຍັງໄດ້ນຳເຄື່ອງອຸປະໂພກ ມູນຄ່າເກືອບ 4 ລ້ານກີບ ມອບໃຫ້ແກ່ໃຫ້ກອງຮ້ອຍຊາຍແດນ 512 ຕື່ມອີກ.

(ດີລຳພົນ ພົມມະຈັນ ແລະ ນາງ ຄັດສອນ ຮຸ່ງສະຫວ່າງ)

ການເປັນຢູ່ຂອງກົມກອງໃຫ້ດີຂຶ້ນ ໂດຍການສ້າງຄວາມເຂັ້ມແຂງດ້ວຍຕົນເອງ ເພິ່ງຕົນເອງ, ເອົາໃຈໃສ່ໃນການເຝິກແອບກຳລັງເພື່ອຮັບປະກັນຄວາມປອດໄພພ້ອມທັງຮັກສາໄດ້ຈັນຍາບັນໃຫ້ມີຄວາມເຂັ້ມແຂງ ແລະ

ວັນດຽວກັນ, ທ່ານ ຂັນໄຊ ລັດຖະເຮົ້າ ຮອງປະທານສະພາປະຊາຊົນແຂວງ ພ້ອມດ້ວຍຕາງໜ້າຈາກພະແນກສຶກສາທິການ ແລະ ກິລາ, ທະນາຄານສົ່ງເສີມກະສິກຳ, ບໍລິສັດອີທີແອວມະຫາຊົນ, ພະແນກຍຸ



# ສສຊ ຊຸດທີ IX ແຂວງອຸດົມໄຊ ພົບປະໂອ້ລົມຜູ້ມີສິດເລືອກຕັ້ງ

(ສພຊ) ວັນເສົາທີ 15 ມັງກອນ 2022, ທ່ານ ນິສິດ ແກ້ວປັນຍາ ສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ IX ປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ ໄດ້ລົງພົບປະໂອ້ລົມພໍ່-ແມ່ປະຊາຊົນຜູ້ມີສິດເລືອກຕັ້ງທີ່ບ້ານນາປາໃຕ້ເມືອງແບງ ແຂວງອຸດົມໄຊ; ມີທ່ານ ນາງ ວັນສີ ພວງມະໄລ ເລຂາທິການສະພາປະຊາຊົນແຂວງ, ທ່ານ ຄຳພອນ ພົມມະລາດ ຮອງເລ



ຂາພັກເມືອງ ສະມາຊິກສະພາປະຊາຊົນແຂວງ ຊຸດທີ II ປະຈຳເຂດເລືອກຕັ້ງເມືອງແບງ; ມີເລຂາພັກບ້ານ, ນາຍບ້ານແລະ ພໍ່-ແມ່ປະຊາຊົນຜູ້ມີສິດເລືອກຕັ້ງພາຍໃນບ້ານເຂົ້າຮ່ວມ.

ການພົບປະຄັ້ງນີ້, ທ່ານ ນິສິດ ແກ້ວປັນຍາ ໄດ້ນຳເອົາບາງເນື້ອໃນຂອງບົດສັງລວມຫຍໍ້ ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX, ສະພາປະຊາຊົນແຂວງ ຊຸດທີ II ມາສະເໜີໃຫ້ພໍ່-ແມ່ປະຊາຊົນຜູ້ມີສິດເລືອກຕັ້ງຮັບຮູ້ ແລະ ເຂົ້າໃຈ ທັງໄດ້ນຳເອົາເກີບຈຳນວນ 160 ຄູ່ ລວມເປັນເງິນປະມານ 16 ລ້ານກວ່າກີບ ມອບໃຫ້ບ້ານນາປາໃຕ້ ເພື່ອສົ່ງມອບໃຫ້ຄອບຄົວທຸກຍາກ, ຂາດເຂີນ ແລະ ຈັດແບ່ງໃຫ້ປະຊາຊົນຕາມຄວາມເໝາະສົມ.

(ແສງພອນ ອິນນະລົງ).



# ຖະແຫລງຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງ ສພຂ ອຸດົມໄຊ ຊຸດທີ II



(ສພຊ) ວັນພຸດທີ 19 ມັງກອນ 2022, ທີ່ສະຖານີວິທະຍຸ-ໂທລະພາບແຂວງ ທ່ານ ນາງ ວັນສີ ພວງມະໄລ ເລຂາທິການສະພາປະຊາຊົນແຂວງ ໄດ້ຖະແຫລງຂ່າວຕໍ່ສື່ມວນຊົນຂອງແຂວງວ່າ:

ຕາງໜ້າຄະນະປະຈຳສະພາປະຊາຊົນແຂວງ, ຄະນະເລຂາທິການສະພາປະຊາຊົນແຂວງ ມີຄວາມຍິນດີ ແລະ ຖືເປັນກຽດແຈ້ງມາຍັງບັນດາທ່ານການນຳພັກ-ລັດ, ພະນັກງານ-ລັດຖະກອນ, ທະຫານ-ຕຳຫລວດ, ນັກຮຽນ-ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງປະຊາຊົນບັນດາເຜົ່າໃນທົ່ວແຂວງ ຮັບຊາບກ່ຽວກັບຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນແຂວງ (ສພຂ) ຊຸດທີ II ດັ່ງນີ້:

1. ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນແຂວງ ຊຸດທີ II ໄດ້ເລີ່ມໄຂຂຶ້ນໃນວັນທີ 11-13 ມັງກອນ 2022 ເຊິ່ງໄດ້ໃຊ້ເວລາດຳເນີນກອງປະຊຸມທັງໝົດ 3 ວັນເຕັມ; ກອງປະຊຸມຄັ້ງນີ້ນອກຈາກການເຂົ້າຮ່ວມຂອງສະມາຊິກສະພາປະຊາຊົນແຂວງ (ສສຂ) ຊຸດທີ II, ສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ IX ແລ້ວ ຍັງມີການນຳພັກ-ລັດ ຂັ້ນແຂວງ-ຂັ້ນເມືອງ, ບັນດາພະແນກການ, ອົງການທຽບເທົ່າພະແນກ, ອົງການຈັດຕັ້ງມະຫາຊົນ ແລະ ແຂກຖືກເຊີນເຂົ້າຮ່ວມທັງໝົດ 169 ທ່ານ, ຍິງ 39 ທ່ານ.

2. ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນແຂວງ ຊຸດທີ II, ໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງ ໂດຍໄດ້ອອກເປັນມະຕິກອງປະຊຸມດັ່ງນີ້:

1) ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານກ່ຽວກັບການເຄື່ອນໄຫວວຽກງານຂອງອົງການປົກຄອງແຂວງ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ປະຈຳປີ 2021 ແລະ ທິດທາງແຜນການປະຈຳປີ 2022;

2) ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ຂອງອົງການກວດສອບປະຈຳພາກເໜືອ ປະຈຳປີ 2021, ທິດທາງແຜນການ ປະຈຳປີ 2022 ແລະ ຜົນການກວດສອບບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2020;

3) ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານຂອງອົງການກວດກາລັດແຂວງ ປະຈຳປີ 2021, ທິດທາງແຜນການປະຈຳປີ 2022 ແລະ ການກວດກາຕາມຜົນການກວດສອບ ປະຈຳປີ 2019;

4) ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ ກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022.

5) ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາປະຊາຊົນແຂວງ ກ່ຽວກັບການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງ ປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022;

6) ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາການສ້າງ ແລະ ປັບປຸງຂໍ້ຕົກລົງຂອງທ່ານເຈົ້າແຂວງ ຈຳນວນ 4 ສະບັບ ໃນນີ້: (ຮ່າງ)ຂໍ້ຕົກລົງສ້າງໃໝ່ 3 ສະບັບຄື: ຂໍ້ຕົກລົງຂອງທ່ານເຈົ້າແຂວງວ່າດ້ວຍ ກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ, ຂໍ້ຕົກລົງຂອງທ່ານເຈົ້າແຂວງວ່າດ້ວຍ ການຄຸ້ມຄອງແຮ່ທາດອະໂລຫະສຳລັບກໍ່ສ້າງອຸດສາຫະກຳພາຍໃນແຂວງອຸດົມໄຊ ແລະ ຂໍ້ຕົກລົງຂອງທ່ານເຈົ້າແຂວງວ່າດ້ວຍ ການທົດແທນຄ່າເສຍຫາຍຈາກໂຄງການພັດທະນາແຂວງອຸດົມໄຊ ແລະ ຮ່າງຂໍ້ຕົກລົງ ສະບັບປັບປຸງ 1 ສະບັບຄື: ຂໍ້ຕົກລົງຂອງທ່ານເຈົ້າແຂວງວ່າດ້ວຍ ກອງທຶນໄພພິບັດ ແລະ ສັງຄົມສົງເຄາະ.

ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນແຂວງ ຊຸດທີ II ໄດ້ສະເໜີໃຫ້ 5 ພາກສ່ວນຂຶ້ນລາຍງານ, ມີທ່ານເຈົ້າແຂວງອຸດົມໄຊ ແລະ 10 ພາກສ່ວນຂຶ້ນຊີ້ແຈງບາງບັນຫາທີ່ພົ້ນເດັ່ນຂອງສັງຄົມ ຕາມຄຳຊັກຖາມຂອງສະມາຊິກສະພາປະຊາຊົນແຂວງ ທີ່ໄດ້ຍົກຂຶ້ນຢູ່ໃນກອງປະຊຸມ.

ຄຽງຄູ່ກັບການພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນດັ່ງກ່າວມາຂ້າງເທິງນັ້ນ, ໃນໄລຍະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ຊຸດທີ II ມີປະຊາຊົນບັນດາເຜົ່າສົ່ງຄຳຄິດຄຳເຫັນຜ່ານໂທລະສັບສາຍດ່ວນ 081 156 ຈຳນວນ: 16 ສາຍ, ມີ 23 ບັນຫາ ເຊິ່ງພົວພັນເຖິງການຄຸ້ມຄອງບໍລິຫານລັດ, ການພັດທະນາເສດຖະກິດ-ສັງຄົມ, ການພັດທະນາທີ່ມີຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ຕໍ່ກັບຄຳຄິດເຫັນດັ່ງກ່າວ ກອງເລຂາກອງປະຊຸມໄດ້ສັງລວມ ແລະ ໄດ້ນຳເຂົ້າຜ່ານກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ພ້ອມທັງມອບໃຫ້ຄະນະກຳມະການທີ່ກ່ຽວຂ້ອງ ປະສານສົມທົບກັບພະແນກການ, ອົງການກ່ຽວຂ້ອງ ຄົ້ນຄວ້າແກ້ໄຂໃຫ້ຖືກຕ້ອງສອດຄ່ອງຕາມລະບຽບກົດໝາຍ ແລະ ທ່ວງທັນເວລາ.

ໃນນາມຕາງໜ້າຄະນະປະຈຳສະພາປະຊາຊົນແຂວງ, ຂ້າພະເຈົ້າຂໍຂອບໃຈມາຍັງບັນດາທ່ານການນຳພັກ-ລັດ, ພະນັກງານ-ລັດຖະກອນ, ທະຫານ-ຕຳຫລວດ, ນັກຮຽນ-ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງປະຊາຊົນບັນດາເຜົ່າທຸກຊັ້ນຄົນໃນທົ່ວແຂວງ ແລະ ຕ່າງແຂວງທີ່ໄດ້ຕິດຕາມການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນແຂວງ ຊຸດທີ II ຄັ້ງນີ້ ໂດຍຜ່ານການຖ່າຍທອດສົດທາງວິທະຍຸ-ໂທລະໂຄງຂອງແຂວງ, ຜ່ານທາງເຟສບຸກໄລນ໌ (Live) ຕະຫລອດໄລຍະດຳເນີນກອງປະຊຸມ.

( ແສງພອນ ອິນນະລົງ).

# ກອງປະຊຸມຄະນະປະຈຳ ສພຂ ບໍ່ແກ້ວ ປະຈຳເດືອນມັງກອນ



(ສພຊ) ວັນທີ 18 ມັງກອນ 2022, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ບໍ່ແກ້ວໄດ້ມີກອງປະຊຸມປະຈຳເດືອນມັງກອນ ໂດຍການເປັນປະທານຂອງທ່ານ ຈອມສີ ລັດຕະນະປັນ ປະທານສະພາປະຊາຊົນແຂວງ; ມີບັນດາຄະນະປະຈຳສະພາປະຊາຊົນແຂວງ ແລະ ຮອງເລຂາທິການສະພາປະຊາຊົນແຂວງເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້, ໄດ້ຮັບຟັງບົດລາຍງານກ່ຽວກັບການກະກຽມດ້ານຕ່າງໆ ເພື່ອຮັບໃຊ້ໃຫ້ແກ່ການດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງ ສພຂ ບໍ່ແກ້ວ ຊຸດທີ II ແລະ ກອງປະຊຸມປະຈຳປີ 2021 ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ; ຮັບຟັງບົດລາຍງານກ່ຽວກັບການຄົ້ນຄວ້າຮ່າງຂໍ້ຕົກລົງຂອງເຈົ້າແຂວງ ຈຳນວນ 4 ສະບັບ ເປັນຕົ້ນຮ່າງຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງທີ່ດິນວັດທະນະທຳ (ສ້າງໃໝ່), ຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງທຸລະກິດບໍລິການຫ້ອງແຖວ (ສ້າງໃໝ່), ຮ່າງຂໍ້ຕົກລົງວ່າດ້ວຍການເຄື່ອນໄຫວນຳໃຊ້ອຸປະກອນສື່ມວນຊົນ (ສ້າງໃໝ່), ຮ່າງຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງຕົວເມືອງຫ້ວຍຊາຍ (ສະບັບປັບປຸງ); ພ້ອມນັ້ນ, ກອງປະຊຸມຍັງໄດ້ຄົ້ນຄວ້າ ແລະ ປຶກສາຫາລືກ່ຽວກັບວຽກງານຈຳນວນໜຶ່ງ ເປັນຕົ້ນແມ່ນການມອບໂອນກຳມະສິດນຳໃຊ້ພາຫະນະ (ລົດໃຫຍ່) ຂອງແຂວງ ແລະ ສະພາແຫ່ງຊາດປະກອບໃຫ້ ສພຂ ຈຳນວນ 4 ຄັນ ທີ່ພະນັກງານບຳນານຊົມໃຊ້, ປຶກສາຫາລືກ່ຽວກັບໜັງສືສະເໜີຂໍການຕິດຕັ້ງໝໍ້ແປງໄຟຟ້າຂະໜາດ 22 ກິໂລໂວນ ເຂົ້າອາຄານຫລັງໃໝ່ ສພຂ, ການກະກຽມກວດກາໂຄງການກໍ່ສ້າງ ສພຂ ຫລັງໃໝ່.

ຕອນທ້າຍ, ປະທານກອງປະຊຸມໄດ້ເໜັ້ນໜັກໃຫ້ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກະກຽມດ້ານເນື້ອໃນຕ່າງໆທີ່ຈະນຳສະເໜີ ແລະ ພິຈາລະນາ, ຮັບຮອງຢູ່ໃນກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງ ສພຂ ບໍ່ແກ້ວ ຊຸດທີ II ໃຫ້ມີເນື້ອໃນຮັດກຸມ, ຄົບຖ້ວນ ສາມາດນຳໄປຈັດຕັ້ງປະຕິບັດທັນຕາມກຳນົດເວລາທີ່ວາງໄວ້.

(ຂັນຖະໜອມ ແກ້ວມະນີ)

# ກອງປະຊຸມຄົບຄະນະ ປະຈຳປີ ຂອງ ສສຊ ປະຈຳເຂດເລືອກຕັ້ງທີ 18

(ສພຊ) ກອງປະຊຸມຄົບຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ ປະຈຳປີ 2021 ໄດ້ໄຂຂຶ້ນໃນວັນທີ 19 ມັງກອນ 2022 ທີ່ສະໂມສອນເມືອງອະນຸວົງ ໂດຍການເປັນປະທານຂອງທ່ານ ແດງ ປະທຸມທອງ ສສຊ ປະຈຳເຂດເລືອກຕັ້ງທີ 18 ປະທານຄະນະປະຈຳສະພາປະຊາຊົນແຂວງໄຊສົມບູນ; ເຂົ້າຮ່ວມມີທ່ານ ທອງວັນ ທຳມະວົງ ຫົວໜ້າຄະນະຈັດຕັ້ງແຂວງ; ມີ ສສຊ ປະຈຳເຂດເລືອກຕັ້ງ ແລະ ຫົວໜ້າພະແນກການ, ອົງການ ແລະ ກົມກອງອ້ອມຂ້າງແຂວງເຂົ້າຮ່ວມ.




ໃນທີ່ປະຊຸມ, ຜູ້ເຂົ້າຮ່ວມໄດ້ຮັບຟັງ, ພິຈາລະນາ ແລະ ຮັບຮອງເອົາບົດສະຫລຸບການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022 ຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ ແລະ ຮັບຟັງບົດລາຍງານຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX; ພ້ອມນັ້ນ, ຜູ້ເຂົ້າຮ່ວມຍັງໄດ້ປະກອບຄຳຄິດເຫັນຢ່າງກົງໄປກົງມາເລິກເຊິ່ງ ເພື່ອເປັນການປັບປຸງເອກະສານ ແລະ ເພື່ອນຳໄປປະຕິບັດຈັດຕັ້ງວຽກງານໃນຕໍ່ໜ້າ ທັງນີ້ກໍເພື່ອພາລະກິດຂອງສະພາແຫ່ງຊາດ ກໍຄືສະພາປະຊາຊົນແຂວງ ແລະ ເພື່ອໃຫ້ການດຳລົງຊີວິດ ຂອງພໍ່ແມ່ປະຊາຊົນພາຍໃນແຂວງໄຊສົມບູນມີຄວາມສະຫງົບສຸກ ແລະ ສີວິໄລ ຂຶ້ນເປັນກ້າວໆ.

(ນາງ ອຳໄພພອນ ແກ້ວວິໄລ)







## ສຸກສະບາຍຫາຍໂຣຄາ

# ຫາວຫລາຍ ອາດມີອັນຕະລາຍຕໍ່ສຸຂະພາບ

**# ສາວແອ່ນ**



ເມື່ອທ່ານຫາວ ຄົນອ້ອມຂ້າງມັກຈະຖາມວ່າ ນອນເດິກຫວາ ຫລື ບໍ່ໄດ້ນອນບໍ? ຫລື ຖ້ານັ່ງລົມກັນອາດຈະຖືກຖາມວ່າເບື່ອຫວາ ຫລື ຖືກແນມດ້ວຍສາຍຕາທີ່ບົ່ງບອກວ່າທ່ານກຳລັງເສຍມາລະຍາດ? ແຕ່ແທ້ຈິງແລ້ວແມ່ນຮ່າງກາຍສັ່ງໃຫ້ຫາວ ແຕ່ເພາະສາເຫດຫຍັງນັ້ນ ແລະ ຫາວສໍ່າໃດຈຶ່ງເອີ້ນວ່າຜິດປົກກະຕິ; ມື້ນີ້, ໃນຄໍລຳສຸກສະບາຍຫາຍໂລຄາສະບັບນີ້ ເຮົາມີມານຳສະເໜີ ເພື່ອເປັນອີກໜຶ່ງທາງເລືອກໃຫ້ແກ່ທ່ານໃນການສັງເກດໂຕເອງ.

ການຫາວ ແມ່ນກົນໄກໜຶ່ງຂອງຮ່າງກາຍທີ່ບົ່ງບອກວ່າຕ້ອງການເອົາອົກຊີແຊນຈາກອາກາດ ເຂົ້າໄປໃນກະແສເລືອດ ພ້ອມທັງຊ່ວຍຂັບກາກໂບນິກອອກຈາກກະແສເລືອດ ເພື່ອຮັກສາຄວາມສົມດູນຂອງຮ່າງກາຍ; ການຫາວຈະເກີດຂຶ້ນເມື່ອຮ່າງກາຍມີອົກຊີແຊນບໍ່ພຽງພໍ ຫລື ມີກາກໂບນິກຫລາຍເກີນໄປໃນເລືອດ ຈຶ່ງເຮັດໃຫ້ເຫງົານອນ, ງ່ວງ ແລະ ໃນທີ່ສຸດກໍຫາວນອນນັ້ນເອງ.

ການຫາວນອນເລື້ອຍໆ ແມ່ນການຫາວທີ່ເກີດຂຶ້ນຫລາຍກວ່າໜຶ່ງຄັ້ງຕໍ່ນາທີ ເຖິງວ່າສາເຫດທົ່ວໄປຂອງການຫາວ ອາດຈະເກີດຈາກຄວາມຢາກນອນ ຫລື ໝົດແຮງ ແຕ່ບາງເທື່ອການຫາວທີ່ຜິດປົກກະຕິນັ້ນອາດຈະເກີດມາຈາກເຫດຜົນດັ່ງນີ້:

1. ພັກຜ່ອນບໍ່ພຽງພໍ: ການພັກຜ່ອນບໍ່ພຽງພໍໃນຕອນກາງຄືນເຮັດໃຫ້ເກີດອາການຢາກນອນໃນຕອນກາງເວັນ ເບິ່ງຄືວ່າບໍ່ຮ້າຍແຮງແຕ່ອາດຈະສົ່ງຜົນກະທົບຕໍ່ລະບົບພູມຕ້ານທານ ເຮັດໃຫ້ເກີດຄວາມສ່ຽງຕໍ່ການເປັນພະຍາດຮ້າຍແຮງຕ່າງໆ ເຊັ່ນ: ໂລກອ້ວນ, ໂລກຫົວໃຈ ຫລື ໂລກຊຶມເສົ້າ ແລະອື່ນໆ.

2. ນອນບໍ່ຫລັບ: ການນອນບໍ່ຫລັບເປັນອາການທີ່ຮ່າງກາຍຮູ້ສຶກຢາກນອນ ແຕ່ບໍ່ສາມາດຫລັບໄດ້ ອາດຈະໃຊ້ເວລາດົນກວ່າປົກກະຕິ, ນອນຫລັບຍາກແຕ່ຕື່ນເຊົ້າ ຫລື ຕື່ນໃນກາງຄືນແລ້ວບໍ່ສາມາດນອນຕໍ່ໄດ້ ເຮັດໃຫ້ຮ່າງກາຍຮູ້ສຶກອ່ອນເພຍ ສະນັ້ນ, ຄວນເຂົ້ານອນໃຫ້ເປັນເວລາ ເພື່ອໃຫ້ກັບຮ່າງກາຍຊິນເຄີຍ ແລະ ຄວນງົດເຄື່ອງດື່ມທີ່ມີສານກະຕຸ້ນສະໝອງເຊັ່ນ: ຄາເຟອີນທີ່ມີໃນຊາ, ກາເຟ, ນໍ້າອັດລົມ, ເຄື່ອງດື່ມພະລັງງານ ແລະ ອື່ນໆ; ແຕ່ຖ້າມີອາການນອນບໍ່ຫລັບເລື້ອຍໆ ຄວນໄປພົບແພດ.

3. ຜົນຂ້າງຄຽງຂອງຢາ: ກຸ່ມຄົນທີ່ກິນຢາເຊັ່ນ: ຢາຕ້ານອາການຊຶມເສົ້າ ຫລື ວິຕົກກັງວົນ ອາດຈະເຮັດໃຫ້ເກີດຜົນຂ້າງຄຽງມີອາການງ່ວງຊຶມ ແຕ່ນອນບໍ່ຫລັບ.

4. ຜົນຂ້າງຄຽງຈາກພະຍາດທີ່ເປັນ: ມີຫລາຍພະຍາດທີ່ເຮັດໃຫ້ຮ່າງກາຍງ່ວງນອນຫລາຍກວ່າປົກກະຕິເຊັ່ນ: ເປືອກປະສາດອັກເສບ MS (multiple sclerosis), ເນື້ອງອກໃນສະໝອງ, ໂລກຫລອດເລືອດໃນສະໝອງ, ພະຍາດບ້າໝູ ແລະອື່ນໆ.

**ຂໍ້ມູນຈາກ:**

www.sanook.com

**ສາລາກະວີ**

# ມູນເຊື້ອກອງທັບ

**# ສາຍນໍ້າອູແດນງາມ**

✻ ປະຊາລາວຈາລຶກໝັ້ນ ຝັງແນບໃນຊອງ
ບໍ່ມີໄລລືມຫລົງ ລົບເລືອນລົງໄດ້
ຫລາຍຜົນງານສານສ້າງ ວິລະກຳສູງສົ່ງ
ຄຸນຄ່າຄົງຄູ່ໄວ້ ຊາດໄດ້ຈື່ຈຳ ແທ້ນາ

✻ 20 ມັງກອນແມ່ນມື້ ສານກໍ່ວິລະຊົນ
ກອງທັບລາດຊະວົງ ອາດຫານແຮງກ້າ
ຂານອາສາຕີສູ້ ຍິນຍອມສະຫລະຊີບ
ເພື່ອປະຊາຊາດພີ່ນ້ອງ ໄກພົ້ນຈາກມານ ຊອບແລ້ວ

✻ ເຖິງວ່າແສນຍາກຍຸ້ງ ລຳບາກກາຍໃຈ
ບໍ່ເຄີຍຍອມຈຳນົນ ສັດຕູໂຕຮ້າຍ
ອຸປະສັກ ຢາຍຂວາງໜ້າ ຕັນທາງກໍຕາມຊ່າງ
ລະເບີດລູກປືນ ກໍຜ່າມ້າງ ປະສິງໄວ້ບ່ອນມີໄຊ ພຸ້ນແລ້ວ

✻ ແມ່ນເສັ້ນທາງຕໍ່າຄ້ອຍ ລົງຮ່ອມແຄມເຫວ
ບຸປ່າພູດົງໝາ ຜ່ານລຳທານນໍ້າ
ອາໄສນອນຕາມພື້ນ ທັງຢືນຍາມແລງຄໍ່າ
ແຕ່ໃຈບໍ່ໄຫວຫວັ່ນທໍ້ ເກງຢ້ານຢ່າງໃດ

✻ ຫລາຍສິບປີຕໍ່ສູ້ ມີທ່າໄຊຊະນະ
ສົມວ່າເປັນກອງທັບປະຊາຊົນລາວ ເພື່ອປະຊາຊົນແທ້
ເດີນຕາມການສອນຊີ້ ແນວທາງພັກເບື້ອງສ່ອງ
ກອງທັບລາວເກັ່ງກ້າ ດັ່ງຄຳຍໍກ່າວຍ້ອງ ລາວນ້ອຍເຜັດຂີ້ໝູ ແທ້ນາ

✻ 73 ປີວຽນພົບພໍ້ ຂໍສິ່ງພອນໄຊ
ໃຫ້ກອງທັບປະຊາຊົນລາວ ຮຸ່ງເຮືອງໃສແຈ້ງ
ເປັນຮົ້ວໜາລຽນລ້ອມ ປະຄອງເມືອງລາວຢູ່
ຄູ່ປະຊາຊາດເຊື້ອ ເພື່ອແດນລາວລ້ານຊ້າງ ຈະເລີນກ້າວຊູ່ອັນ ນັ້ນແລ້ວ!



## ທັກທາຍ ລະບາຍ

**# ສຽມທ້ຽນ**

### (ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

✻ **ຊົມ**ເຊີຍສຳເລັດກອງປະຊຸມໃຫຍ່ຜູ້ແທນ **ຄັ້ງທີ IV** ຂອງອົງຄະນະພັກສະພາແຫ່ງຊາດ ມີຄະແຫລງລ່າວແຈ້ງ ບອກກ່າວເປັນທາງການ ລາຍງານຜົນສຳເລັດ ທົ່ວສະພາບັນກອງ ພະນັກງານແສນຊື່ນຊົມຍໍຍ້ອງ ຄະນະພັກສະພາຊຸດໃໝ່ ກຽມໄຕ່ຕາມສືບທອດໄດ້ ຕາມຄຳຊີ້ແນະນຳ **ນັ້ນແລ້ວ!**

✻ **ນະ**ຄອນຫລວງວຽງຈັນໄດ້ເອົາໃຈໃສ່ສົ່ງເສີມການນຳໃຊ້**ຖົງຜ້າ ຫລື ກະຕ່າ** ເພື່ອຫລຸດຜ່ອນການນຳໃຊ້ຖົງຢາງປາລາສະຕິກ ຕາມນະໂຍບາຍວ່າໄວ້ ສ 6 ໂຕຂອງ ນວ ທັນຫລຸດຜ່ອນເສດຄ້າງ ມອບໝູ່ວັນບ່ຽາມ ຕາມເຂດສັງຄົມເມືອງທົ່ວນະຄອນຫລວງກວ້າງ ຕາມທິດ 6 ສ ເອົ້າ ຈຸດປະສົງ **ສ ສະອາດ** ປະຕິບັດຕາມເພີ່ນເອົ້າ ຊຸມເຮົາຕ້ອງຊ່ອຍກັນ **ຖືກແລ້ວ!**

✻ **ອາ**ລາອາໄລຢ່າງສຸດຊຶ້ງຕໍ່ການຈາກໄປຂອງທ່ານ **ຄຳພອນ ລັບທະບູນ** ອາດີດຮອງຫົວໜ້າກົມສື່ມວນຊົນ ທີ່ໄດ້ຈາກໂລກນີ້ໄປຢ່າງບໍ່ມີວັນຫວນກັບ ລວມອາຍຸໄດ້ **61 ປີ** ບັດນີ້ໄລຫ່າງແລ້ວ ລາລັບດັບສັງຂານ ໄປສູ່ຮ່ອງນິພານ ທຸກຂັງສູນສິ້ນ ຂໍໃຫ້ໄປຍບົນຟ້າ ດວງວິນຍານສະຖິດຢູ່ ສວ່າງສະຫວັນຊັ້ນຟ້າ ທາກຊາດໜ້າມີໃຫ້ຕ່າວຍ້ອນ ຄືນເບື້ອງບ່ອນສະພາ **ນັ້ນທ້ອນ!**

## ຊອບຍິ້ມ

**# ທົວພູ**

**ເລື່ອງ: ຫ້າມລົບກວນ**

ມີຂະບວນທັດສະນະຂະບວນໜຶ່ງໄດ້ນັ່ງຖ້າຊາຍໜຸ່ມຄົນໜຶ່ງທີ່ຢູ່ໃນຫ້ອງພັກ ຈົນກາຍເວລານັດໄປ 30 ນາທີ ແຕ່ກໍຍັງບໍ່ລົງມາ ຈຶ່ງໄດ້ມີຍິງສາວຄົນໜຶ່ງໂທໄປດ້ວຍວາລົມໃນໂທວ່າ:

"ເຈົ້າຊິໄປຫລືບໍ່ ພວກຂ້ອຍນັ່ງຖ້າເຈົ້າເກືອບເຄິ່ງຊົ່ວໂມງລະໃດ"

- ຂ້ອຍດີໃຈຫລາຍທີ່ເຈົ້າໂທຫາ ຊ່ວຍຂ້ອຍແດ່.......... ຂ້ອຍບໍ່ຮູ້ຊິເຮັດແນວໃດ?

"ເກີດຫຍັງຂຶ້ນ!!!!!"

- ຂ້ອຍບໍ່ຮູ້ຊິອອກໄປຈັ່ງໃດ ໃນຫ້ອງມີປະຕູສາມບານ ປະຕູໜຶ່ງຂຽນວ່າຫ້ອງນໍ້າ ປະຕູໜຶ່ງຂຽນວ່າຕູ້ເຄື່ອງນຸ່ງ ສ່ວນອີກປະຕູໜຶ່ງ ຂ້ອຍບໍ່ຮູ້ວ່າແມ່ນຫຍັງ ຂ້ອຍບໍ່ກ້າເປີດ ເພາະເຫັນປ້າຍຫ້ອຍຢູ່ວ່າ "ຫ້າມລົບກວນ" !!!!!!!!!!!!!!!!!!!!!!!!!!!!!!



## ຄະຕິເຕືອນໃຈ

**# ດອກຫຍ້າ**

ໂອກາດບໍ່ສາມາດເກີດຂຶ້ນເອງໄດ້
ແຕ່ເຮົາສາມາດສ້າງຂຶ້ນໄດ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 52 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 25 ມິຖຸນາ 2018

## ກົດໝາຍ
## ວ່າດ້ວຍການໃຫ້ວັກຊີນກັນພະຍາດ

### ພາກທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ, ຕິດ ຕາມ ແລະ ກວດກາການເຄື່ອນໄຫວໃຫ້ວັກຊີນກັນພະຍາດ ເພື່ອເຮັດໃຫ້ວຽກງານດັ່ງກ່າວໄດ້ຮັບການຈັດຕັ້ງປະ ຕິບັດຢ່າງທົ່ວເຖິງ, ເປັນລະບົບ, ຕໍ່ເນື່ອງ ແລະ ຍືນຍົງ ໂດຍການມີສ່ວນຮ່ວມ ແລະ ເປັນເຈົ້າການ ຂອງທຸກພາກສ່ວນໃນສັງຄົມ ແນໃສ່ປົກປ້ອງ ສຸຂະພາບ, ຊີວິດ ແລະ ຊັບສິນ ຂອງພົນລະເມືອງ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍຈາກການເຈັບປ່ວຍທີ່ເກີດຈາກພະຍາດ ທີ່ກັນໄດ້ດ້ວຍວັກຊີນກັນພະຍາດ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ການໃຫ້ວັກຊີນກັນພະຍາດ**

ການໃຫ້ວັກຊີນກັນພະຍາດ ແມ່ນ ການນຳເອົາວັກຊີນກັນພະຍາດເຂົ້າໄປໃນຮ່າງກາຍຂອງຄົນ ດ້ວຍວິທີການທາງດ້ານການແພດ ເຊັ່ນ ສັກ, ຢອດ, ດົມ ຫຼື ວິທີການອື່ນ ເພື່ອກະຕຸ້ນຮ່າງກາຍໃຫ້ສ້າງພູມຄຸ້ມກັນ ໃນການກັນ ແລະ ຕ້ານພະຍາດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ວັກຊີນ ໝາຍເຖິງ ຜະລິດຕະພັນທາງການແພດ ທີ່ຜະລິດຈາກເຊື້ອພະຍາດ ແລະ ທາດພິດຂອງພະຍາດ ໂດຍຜ່ານຂະບວນການທາງວິທະຍາສາດທີ່ກະຕຸ້ນລະບົບການສ້າງພູມຄຸ້ມກັນຂອງຮ່າງກາຍ;

2. ພູມຄຸ້ມກັນ ໝາຍເຖິງ ສະພາບຄວາມພ້ອມຂອງຮ່າງກາຍ ທີ່ສາມາດຕ້ານກັບພະຍາດໃດໜຶ່ງໄດ້ດ້ວຍຕົວມັນເອງ;

3. ເຊື້ອຈຸລິນຊີ ແລະ ເຊື້ອຈຸລະໂລກ ໝາຍເຖິງ ສິ່ງທີ່ມີຊີວິດນ້ອຍໆທີ່ບໍ່ສາມາດເຫັນດ້ວຍຕາເປົ່າ ຊຶ່ງກໍ່ໃຫ້ເກີດ ຫຼື ບໍ່ກໍ່ໃຫ້ເກີດພະຍາດ ໃນຮ່າງກາຍຂອງຄົນເຮົາ;

4. ນ້ຳລະລາຍ ໝາຍເຖິງ ທາດແຫຼວຊະນິດໜຶ່ງທີ່ມີຄວາມເຂັ້ມຂຸ້ນສະເພາະ ຊຶ່ງນຳໃຊ້ປະສົມກັບວັກຊີນກັນພະຍາດຊະນິດເປັນຝຸ່ນ ຫຼື ກ້ອນ;

5. ອຸປະກອນການເກັບຮັກສາວັກຊີນກັນພະຍາດ ໝາຍເຖິງ ຕູ້ເຢັນ, ຕູ້ແຊ່ແຂງ, ຫີບເຢັນ, ຖົງພາຍວັກຊີນ ຫຼື ອຸປະກອນອື່ນທີ່ໃຊ້ສະເພາະ ຊຶ່ງປະກອບເປັນຕ່ອງໂສ້ຄວາມເຢັນ ເພື່ອເກັບຮັກສາວັກຊີນກັນພະຍາດ;

6. ອຸປະກອນການໃຫ້ວັກຊີນກັນພະຍາດ ໝາຍເຖິງ ເຂັມແຮງ, ເຂັມສັກຢາ, ທໍ່ຢອດ ຫຼື ເຄື່ອງມືອື່ນທີ່ນຳໃຊ້ເຂົ້າໃນການໃຫ້ວັກຊີນກັນພະຍາດ;

7. ອຸປະກອນຕິດຕາມອຸນຫະພູມ ໝາຍເຖິງ ເຄື່ອງບັນທຶກອຸນຫະພູມໃນອຸປະກອນເກັບຮັກສາວັກຊີນກັນພະຍາດ;

8. ຊີຊີ ໝາຍເຖິງ ຫົວໜ່ວຍວັດແທກບໍລິມາດ ເປັນເຊັນຕີແມັດກ້ອນຂອງວັກຊີນກັນພະຍາດ ແລະ ນ້ຳລະລາຍ;

9. ກັບນິລະໄພ ໝາຍເຖິງ ກັບເຈ້ຍແຂງສະເພາະ ທີ່ໃຊ້ບັນຈຸເຂັມແຮງ ແລະ ເຂັມສັກຢາທີ່ໄດ້ຖືກນຳໃຊ້ແລ້ວ ເພື່ອປ້ອງກັນບໍ່ໃຫ້ເຂັມປັກຄົນ, ສັດ, ປົນເປື້ອນສິ່ງແວດລ້ອມ ແລະ ແຜ່ເຊື້ອພະຍາດ;

10. ກຸ່ມເປົ້າໝາຍ ໝາຍເຖິງ ກຸ່ມຄົນ ທີ່ຢູ່ໃນເກນອາຍຸ ແລະ ກຸ່ມຄົນໃນເຂດທີ່ມີຄວາມສ່ຽງ ທີ່ກະຊວງສາທາລະນະສຸກ ໄດ້ກຳນົດໃນແຕ່ລະໄລຍະ ຊຶ່ງຈະຕ້ອງໄດ້ຮັບວັກຊີນກັນພະຍາດໃດໜຶ່ງສະເພາະ;

11. ແຜ່ນພູມ ໝາຍເຖິງ ຕາຕະລາງ ຫຼື ຮູບພາບ ຕິດຕາມກຸ່ມເປົ້າໝາຍທີ່ໄດ້ຮັບວັກຊີນກັນພະຍາດ;

12. ແຜນວາດ ໝາຍເຖິງ ແຜນສະແດງຂອບເຂດໃດໜຶ່ງ ທີ່ໜ່ວຍບໍລິການໃຫ້ວັກຊີນຮັບຜິດຊອບ ເປັນຕົ້ນ ກຸ່ມບ້ານ, ບ້ານ, ພູມສັນຖານ;

13. ຜູ້ພາດໂອກາດ ໝາຍເຖິງ ບຸກຄົນຢູ່ໃນກຸ່ມເປົ້າໝາຍທີ່ຈະໄດ້ຮັບວັກຊີນກັນພະຍາດ ແຕ່ບໍ່ໄດ້ຮັບ ຫຼື ໄດ້ຮັບແລ້ວແຕ່ບໍ່ຄົບຕາມຕາຕະລາງການໃຫ້ວັກຊີນກັນພະຍາດ;

14. ອຸປະກອນຕິດຕາມກ່ອງວັກຊີນ ໝາຍເຖິງ ປ້າຍທີ່ຕິດໃສ່ກ່ອງວັກຊີນກັນພະຍາດ ຊຶ່ງເຮັດດ້ວຍເຈ້ຍພິເສດ ແລະ ມີຈຸດໝາຍ ເພື່ອຕິດຕາມຄຸນນະພາບຂອງວັກຊີນກັນພະຍາດ;

15. ຊີວະວິທະຍາທາງການແພດ ໝາຍເຖິງ ຂະບວນການໃນການນຳໃຊ້ວິທະຍາສາດທຳມະຊາດທີ່ຄົ້ນ ຄວ້າກ່ຽວກັບສິ່ງທີ່ມີຊີວິດດ້ານໂຄງສ້າງ, ການເຮັດວຽກ, ການຈະເລີນເຕີບໂຕ ແລະ ການວິວັດທະນາການເພື່ອ ນຳເຂົ້າໃນຂະບວນການທາງດ້ານການແພດ ເຊັ່ນ ການຜະລິດວັກຊີນເປັນຕົ້ນ;

16. ປະຕິປັກ ໝາຍເຖິງ ຄຳສັບທີ່ມາຈາກຄຳວ່າ ປະຕິກິລິຍາ ແລະ ປໍລະປັກ ເປັນ ປະຕິກິລິຍາທີ່ບໍ່ເພິ່ງປາຖະໜາ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບການໃຫ້ວັກຊີນກັນພະຍາດ**

ລັດ ໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ ຕໍ່ການໃຫ້ວັກຊີນກັນພະຍາດດ້ວຍການໂຄສະນາ ເຜີຍແຜ່, ໃຫ້ຄວາມຮູ້, ຂໍ້ມູນ ຂ່າວສານ ແກ່ພົນລະເມືອງໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ ພ້ອມທັງ ຊຸກຍູ້, ປຸກລະດົມ,ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ກຸ່ມເປົ້າໝາຍໄດ້ຮັບວັກຊີນກັນພະຍາດຢ່າງຄົບຖ້ວນ ແລະ ທົ່ວເຖິງ.

ລັດ ສະໜອງງົບປະມານ, ວັດຖຸປະກອນ, ເຕັກນິກ, ບຸກຄະລາກອນ ແລະ ສົ່ງເສີມການຄົ້ນຄວ້າທາງດ້ານວິທະຍາສາດ ເພື່ອພັດທະນາການໃຫ້ວັກຊີນກັນພະຍາດໃຫ້ພຽງພໍ, ຮັບປະກັນທາງດ້ານປະສິດທິພາບ ແລະ ປະສິດທິຜົນ.

ລັດ ສົ່ງເສີມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ການບໍລິການ,ໃຫ້ການຮ່ວມມື, ປະກອບສ່ວນ ແລະ ລົງທຶນໃສ່ການໃຫ້ວັກຊີນກັນພະຍາດ.

**ມາດຕາ 5 ຫຼັກການກ່ຽວກັບການໃຫ້ວັກຊີນກັນພະຍາດ**

ການໃຫ້ວັກຊີນກັນພະຍາດ ໃຫ້ປະຕິບັດ ຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນພັດທະ ນາສາທາລະນະສຸກ ໃນແຕ່ລະໄລຍະ;

2. ຄຸ້ມຄອງຢ່າງລວມສູນ, ເປັນເອກະພາບ, ສະເໝີພາບ, ໂປ່ງໃສ ແລະ ຍຸຕິທຳ;

3. ຮັບປະກັນຄວາມປອດໄພຕໍ່ຊີວິດ, ສຸຂະພາບຂອງ ພົນລະເມືອງດ້ວຍການນຳໃຊ້ເຕັກໂນໂລຊີ ທີ່ທັນສະໄໝ, ເໝາະສົມ ແລະ ປະຕິບັດຢ່າງຖືກຕ້ອງຕາມຫຼັກການວິທະຍາສາດທາງການແພດ;

4. ສອດຄ່ອງກັບສະພາບຕົວຈິງຂອງການເກີດພະຍາດຢູ່ ພາຍໃນ, ຕ່າງປະເທດ, ພາກພື້ນ ແລະ ສາກົນ;

5. ຮັບປະກັນ ການປະສານສົມທົບ ລະຫວ່າງ ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ;

6. ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

ອ່ານຕໍ່ສະບັບໜ້າ...

---

## ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງ
## ກົດໝາຍກ່ຽວກັບສ່ວຍອາກອນ

ຕໍ່ຈາກສະບັບກ່ອນ...

**ມາດຕາ 18 ການແຈ້ງເສຍ ແລະ ການມອບອາກອນຊົມໃຊ້**

ຜູ້ນຳເຂົ້າສິນຄ້າ, ຜູ້ຜະລິດສິນຄ້າ ແລະ ຜູ້ສະໜອງການບໍລິການ ທີ່ຕ້ອງເສຍອາ ກອນຊົມໃຊ້ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງກົດໝາຍວ່າດ້ວຍອາກອນຊົມໃຊ້ ສະ ບັບເລກທີ 68/ສພຊ, ລົງວັນທີ 19 ມິຖຸນາ 2019 ມີໜ້າທີ່ແຈ້ງເສຍອາກອນຊົມໃຊ້ ດັ່ງນີ້:

- ຜູ້ນຳເຂົ້າສິນຄ້າ ຕ້ອງແຈ້ງເສຍ ແລະ ມອບ ອາກອນຊົມໃຊ້ ໃນເວລາແຈ້ງເສຍພາສີຂາເຂົ້າຢູ່ດ່ານພາສີ ຫຼື ມອບອາກອນຊົມໃຊ້ໃນເວລາມີການສະໜອງສິນຄ້າ ຢູ່ພາຍໃນປະເທດ ຕາມເງື່ອນໄຂທີ່ລັດຖະບານກຳນົດ;
- ຜູ້ຜະລິດສິນຄ້າ ແລະ ຜູ້ສະໜອງການບໍລິການ ຢູ່ພາຍໃນປະເທດຕ້ອງແຈ້ງເສຍ ແລະ ມອບ ອາກອນຊົມໃຊ້ທຸກເດືອນ ບໍ່ໃຫ້ກາຍ ວັນທີ 20 ຂອງເດືອນຖັດໄປ ຕໍ່ຂະແໜງສ່ວຍສາອາກອນບ່ອນຕົນຂຶ້ນກັບ;
- ຜູ້ຊື້ສິນຄ້າ ແລະ/ຫຼື ບໍລິການ ທີ່ເປັນຜູ້ດຳເນີນທຸລະກິດຢູ່ພາຍໃນປະເທດ ຈາກຜູ້ບໍ່ມີພູມລຳເນົາ ທີ່ບໍ່ໄດ້ຈົດທະບຽນສ້າງຕັ້ງວິສາຫະກິດ ຢູ່ ສປປລາວ ໃຫ້ແຈ້ງເສຍ ແລະ ມອບ ອາກອນຊົມໃຊ້ ບໍ່ໃຫ້ກາຍ ວັນທີ 20 ຂອງເດືອນຖັດໄປ. ສຳລັບຜູ້ຊື້ທີ່ເປັນບຸກຄົນທົ່ວໄປໃຫ້ແຈ້ງເສຍອາກອນຊົມໃຊ້ບໍ່ໃຫ້ກາຍ ສິບຫ້າວັນ ນັບແຕ່ວັນໄດ້ຄິດໄລ່ເກັບອາກອນເປັນຕົ້ນໄປ.

ການມອບອາກອນຊົມໃຊ້ ໃຫ້ມອບຜ່ານ ທະນາຄານທຸລະກິດ ທີ່ມີບັນຊີຂອງຄັງເງິນແຫ່ງຊາດ ຫຼື ຄັງເງິນແຫ່ງຊາດ ແລະ ຄັງເງິນແຫ່ງຊາດປະຈຳແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ.

**ມາດຕາ 38 ມາດຕະການປັບໃໝ**

ຜູ້ມອບອາກອນ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານອາກອນຊົມໃຊ້ ຈະຖືກປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:

1 ປັບໃໝ 100.000 ກີບ ຕໍ່ຄັ້ງ ສຳລັບການບໍ່ປະກອບເລກປະຈຳຕົວຜູ້ເສຍອາກອນໃສ່ໃນການແຈ້ງມອບອາກອນຊົມໃຊ້ ພາຍຫຼັງທີ່ມີການກ່າວເຕືອນຢ່າງເປັນລາຍລັກອັກສອນແລ້ວ;

2. ປັບໃໝ 500.000 ກີບ ຕໍ່ຄັ້ງ ສຳລັບການແຈ້ງເສຍອາກອນຊົມໃຊ້ຊັກຊ້າ ບໍ່ຖືກຕາມກຳນົດເວລາທີ່ກຳນົດໄວ້ໃນກົດໝາຍສະບັບນີ້;

3. ປັບໃໝ 1.000.000 ກີບ ຕໍ່ການເລັ່ງທວງໜຶ່ງຄັ້ງ ສຳລັບການບໍ່ສະໜອງເອກະສານ, ຂໍ້ມູນ ກ່ຽວກັບວຽກງານອາກອນຊົມໃຊ້ ພາຍຫຼັງທີ່ມີການກ່າວເຕືອນຢ່າງເປັນລາຍລັກອັກສອນແລ້ວ;

4. ປັບໃໝ 1.500.000 ກີບ ຕໍ່ຄັ້ງ ສຳລັບການບໍ່ແຈ້ງເສຍອາກອນຊົມໃຊ້ ຕາມກຳນົດເວລາທີ່ກຳນົດໄວ້ໃນກົດໝາຍສະບັບນີ້;

5. ປັບໃໝ 3.000.000 ກີບ ຕໍ່ຄັ້ງ ສຳລັບການບໍ່ແຈ້ງການປ່ຽນແປງຂໍ້ມູນ ເປັນຕົ້ນ ທີ່ຕັ້ງວິສາຫະກິດ, ເລກໂທລະສັບ ແລະ ຂໍ້ມູນອື່ນ ໃສ່ໃນການແຈ້ງມອບອາກອນຊົມໃຊ້ ພາຍຫຼັງທີ່ມີການກ່າວເຕືອນຢ່າງເປັນລາຍລັກອັກສອນແລ້ວ;

6. ປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່າອາກອນຊົມໃຊ້ທີ່ແຈ້ງເສຍບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ບໍ່ຄົບຖ້ວນ;

7. ປັບໃໝ ສູນຈຸດໜຶ່ງສ່ວນຮ້ອຍ (0,1%) ຕໍ່ວັນ ຂອງຈຳນວນອາກອນຊົມໃຊ້ທີ່ມອບຊັກຊ້າ ຕາມກຳນົດເວລາ ທີ່ກຳນົດໄວ້ໃນກົດໝາຍສະບັບນີ້;

8. ສຳລັບຈຳນວນອາກອນຊົມໃຊ້ ທີ່ຍັງຄ້າງມອບ ຈະຖືກປະຕິບັດມາດຕະການປັບໃໝ ດັ່ງນີ້:

- ປັບໃໝ ສາມສິບສ່ວນຮ້ອຍ (30%) ຂອງຈຳນວນອາກອນຊົມໃຊ້ທີ່ຕ້ອງມອບ ສຳລັບການເລັ່ງທວງຄັ້ງທີໜຶ່ງ;
- ປັບໃໝ ຫົກສິບສ່ວນຮ້ອຍ (60%) ຂອງຈຳນວນອາກອນຊົມໃຊ້ທີ່ຕ້ອງມອບ ສຳລັບການເລັ່ງທວງຄັ້ງທີສອງ;
- ປັບໃໝ ຮ້ອຍສ່ວນຮ້ອຍ (100%) ຂອງຈຳນວນອາກອນຊົມໃຊ້ທີ່ຕ້ອງມອບ ສຳລັບການເລັ່ງທວງຄັ້ງທີສາມ.

ໃນກໍລະນີຜູ້ລະເມີດ ຫາກບໍ່ປະຕິບັດອາກອນທີ່ຕ້ອງມອບ ແລະ/ຫຼື ຄ່າປັບໃໝ ທີ່ໄດ້ມີການເລັ່ງທວງຕາມກົດໝາຍ ໃຫ້ຂະແໜງສ່ວຍສາອາກອນອອກຄຳສັ່ງອາຍັດເງິນໃນບັນຊີເງິນຝາກຢູ່ທະນາຄານທຸລະກິດ ແລະ/ຫຼື ສະຖາບັນການເງິນທີ່ກ່ຽວຂ້ອງ ຕັ້ງຢູ່ ສປປ ລາວ ພ້ອມທັງແຈ້ງໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງດັ່ງກ່າວ ຊຳລະຄ່າປັບໃໝ ພາຍໃນກຳນົດເວລາ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບແຈ້ງການເປັນຕົ້ນໄປ. ໃນກໍລະນີບໍ່ປະຕິບັດຕາມກຳນົດເວລາດັ່ງກ່າວ ໃຫ້ຂະແໜງສ່ວຍສາອາກອນ ສະເໜີທະນາຄານທຸລະກິດ ຫຼື ສະຖາບັນການເງິນທີ່ກ່ຽວຂ້ອງດຳເນີນການຫັກເງິນໃນບັນຊີເງິນຝາກ ຕາມຈຳນວນເງິນປັບໃໝດັ່ງກ່າວ ແລະ/ຫຼື ສະເໜີຂະແໜງການທີ່ກ່ຽວຂ້ອງ ພິຈາລະນາໂຈະການດຳເນີນທຸລະກິດ, ຖອນທະບຽນວິສາຫະກິດ, ຖອນໃບອະນຸຍາດລົງທຶນ, ໃບອະນຸຍາດອື່ນ ທີ່ກ່ຽວຂ້ອງ ຫຼື ຈະຖືກລົງໂທດຕາມກົດໝາຍ ແລ້ວແຕ່ກໍລະນີ ເບົາ ຫຼື ໜັກ.

ກຳນົດເວລາຂອງການເລັ່ງທວງແຕ່ລະຄັ້ງ ແມ່ນ ສິບຫ້າວັນ ນັບແຕ່ວັນອອກໃບເລັ່ງທວງ ແລະ ສົ່ງໃຫ້ຜູ້ມອບອາກອນຊົມໃຊ້ທີ່ຍັງຄ້າງມອບອາກອນຊົມໃຊ້ ເປັນຕົ້ນໄປ.

**ມາດຕາ 3 ການປ່ຽນແທນເນື້ອໃນຂອງມາດຕາ**

ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ປ່ຽນແທນເນື້ອໃນຂອງມາດຕາ 32 ຂອງກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ສະບັບເລກທີ 66/ສພຊ, ລົງວັນທີ 17 ມິຖຸນາ 2019;

ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ປ່ຽນແທນເນື້ອໃນຂອງມາດຕາ 11, 12, 15, 17, 23, 24, 29, 30, 31, 34, 60 ແລະ 61 ຂອງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 48/ສພຊ, ລົງວັນທີ 20 ມິຖຸນາ 2018;

ກົດໝາຍວ່າດ້ວຍອາກອນລາຍໄດ້ ປ່ຽນແທນເນື້ອໃນຂອງມາດຕາ 14, 16, 18 ແລະ 73 ຂອງກົດໝາຍວ່າດ້ວຍອາກອນລາຍໄດ້ ສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019;

ກົດໝາຍວ່າດ້ວຍອາກອນຊົມໃຊ້ ປ່ຽນແທນເນື້ອໃນຂອງມາດຕາ 15, 17, 18 ແລະ 38 ຂອງກົດ ໝາຍວ່າດ້ວຍອາກອນຊົມໃຊ້ ສະບັບເລກທີ 68/ສພຊ, ລົງວັນທີ 19 ມິຖຸນາ 2019.

**ມາດຕາ 4 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາ ຊົນລາວ ອອກລັດຖະດຳລັດປະກາດໃຊ້, ລົງໃນຈົດໝາຍເຫດທາງລັດຖະການ ແລະ ມີຜົນຈັດຕັ້ງປະຕິບັດແຕ່ວັນທີ 1 ມັງກອນ 2022 ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

**ປານີ ຢາທໍ່ຕູ້**

# ສະພາຜູ້ແທນລາສະດອນໂອຕຣິດ ມີມະຕິໃຫ້ຜູ້ມີອາຍຸ 18 ປີຂຶ້ນໄປ ຕ້ອງຮັບວັກຊີນໂຄວິດ-19

ແປ ແລະ ຮຽບຮຽງ: ນາງ ປາກາລັກ ພິມມີໄຊ




*ໂອຕຣິດ ເປັນປະເທດທຳອິດໃນກຸ່ມສະມາຊິກອີຢູ ທີ່ໃຫ້ຜູ້ມີອາຍຸຕັ້ງແຕ່ 18 ປີ ຈະຕ້ອງໄດ້ຮັບວັກຊີນຕ້ານໂຄວິດ-19 ຖ້າບໍ່ດັ່ງນັ້ນ, ອາດຈະຖືກປັບໃໝເງິນ 3.600 ເອີໂຣ.*

ຕາມການລາຍງານໃນທ້າຍອາທິດຜ່ານມາໃຫ້ຮູ້ວ່າ: ສະພາຜູ້ແທນລາສະດອນໂອຕຣິດ ມີມະຕິລົງຄະແນນ 137 ສຽງ ຜ່ານກົດໝາຍທີ່ກຳນົດໃຫ້ຜູ້ອາຍຸ 18 ປີຂຶ້ນໄປ ຕ້ອງໄດ້ຮັບການສັກຢາປ້ອງກັນພະຍາດໂຄວິດ-19 ຄົບ ຕາມເງື່ອນໄຂຂອງວັກຊີນແຕ່ລະຊະນິດ ມີພຽງສຽງຄັດຄ້ານ 33 ທ່ານ.

ມາດຕະການດັ່ງກ່າວ ຈະມີຜົນສັກສິດແຕ່ວັນທີ 14 ກຸມພານີ້ເປັນຕົ້ນໄປ ຖ້າບໍ່ມີການປ່ຽນແປງ ໂດຍມີຂໍ້ຍົກເວັ້ນພຽງແຕ່ສຳລັບແມ່ຍິງຖືພາ ແລະ ຜູ້ທີ່ມີບັນຫາສຸຂະພາບສ່ວນບຸກຄົນ ເຊິ່ງຕ້ອງມີຫລັກຖານຢັ້ງຢືນຈາກຜູ້ຊ່ຽວຊານວ່າເຂົາເຈົ້າບໍ່ສາມາດຮັບຢາວັກຊີນໄດ້ ນອກຈາກນີ້, ບໍ່ຖືວ່າເປັນຂໍ້ຍົກເວັ້ນ. ຜູ້ໃດລະເມີດຈະຖືກປັບໃໝເຖິງ 3.600 ເອີໂຣ (ປະມານ 46 ລ້ານກວ່າກີບ).

ເຖິງແມ່ນວ່າກົດໝາຍຍັງຕ້ອງໄດ້ຮັບການອະນຸມັດຈາກສະພາສູງ ແລະ ຕ້ອງໄດ້ຮັບການລົງນາມໂດຍປະທານາທິບໍດີ ເພື່ອໃຫ້ມີຜົນບັງຄັບໃຊ້, ແຕ່ທຸກຝ່າຍເຊື່ອວ່າ ຈະບໍ່ມີອຸປະສັກອີກ ແລະ ກົດໝາຍຈະມີຜົນບັງຄັບໃຊ້ພາຍໃນເວລາກຳນົດໄວ້.

ທ່ານ ຄຣານ ເນຣຳເມີ ນາຍົກລັດຖະມົນຕີໂອຕຣິດ ໄດ້ກ່າວເຖິງກົດໝາຍດັ່ງກ່າວ ເຊິ່ງຈະເຮັດໃຫ້ໂອຕຣິດເປັນປະເທດທຳອິດໃນບັນດາປະເທດສະມາຊິກຂອງສະຫະພາບເອີຣົບທີ່ສັ່ງໃຫ້ພົນລະເມືອງຂອງຕົນໄດ້ຮັບການສັກຢາປ້ອງກັນພະຍາດໂຄວິດ-19, ໂດຍທ່ານກ່າວວ່າ: "ວັກຊີນແມ່ນໂອກາດ ເພື່ອຊ່ວຍສັງຄົມກັບຄືນເປັນປົກກະຕິ".

ໃນຂະນະດຽວກັນ, ທ່ານຍັງໄດ້ກ່າວເຖິງການກຳນົດເຂດປອດໄພຄື: ອ້ອມຮອບໂຮງໝໍ ແລະ ສະຖານີບໍລິການສຸຂະພາບທັງໝົດ ຈະມີຕຳຫລວດໃນເຄື່ອງແບບປະຈຳການ ເພື່ອຮັກສາຄວາມປອດໄພ, ຄວາມສະຫງົບ ແລະ ເພື່ອຮັບມືກັບຜູ້ປະທ້ວງຕ້ານການສັກຢາວັກຊີນອີກດ້ວຍ.

**ແຫລ່ງຂ່າວ: Daily News**

# ສານມາເລເຊຍ ປະຕິເສດການຂໍຍົກຟ້ອງ ຂອງຜູ້ນຳພັກສາມັກຄີມາເລເຊຍ

ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ

*ສານສູງຂອງມາເລເຊຍ ໄດ້ປະຕິເສດຄຳຮຽກຮ້ອງຂອງທະນາຍຄວາມທ່ານ ອາໝັດ ຊາຮິດ ຮາມິດີ ປະທານພັກສາມັກຄີມາເລເຊຍ ທີ່ໄອຍະການສັ່ງຟ້ອງ 47 ຂໍ້ກ່າວຫາ.*

ອີງຕາມລາຍງານຂ່າວໃຫ້ຮູ້ວ່າ: ທະນາຍຄວາມທ່ານ ອາໝັດ ຊາຮິດ ຮາມິດີ ປະທານພັກສາມັກຄີມາເລເຊຍ ທີ່ຕົກເປັນຈຳເລີຍ ຖືກໄອຍະການສັ່ງຟ້ອງ 47 ຂໍ້ກ່າວຫາ ໄດ້ອ້າງອີງໃສ່ກົດໝາຍຂອງຄະນະກຳມະການຕ້ານການສໍ້ລາດບັງຫລວງຂອງມາເລເຊຍ ມາດຕາ 30 (7) ທີ່ລະບຸວ່າ: ບຸກຄົນໃດເປີດເຜີຍຂໍ້ມູນໃຫ້ຄະນະກຳມະການຕ້ານການສໍ້ລາດບັງຫລວງຂອງມາເລເຊຍ ຈະບໍ່ຖືກດຳເນີນຄະດີ ຍົກເວັ້ນແຕ່ວ່າເປັນການເປີດເຜີຍຂໍ້ມູນທີ່ບໍ່ຖືກຕ້ອງ ຫລື ຂໍ້ມັນບໍ່ຈິງ ໂດຍໃຫ້ເຫດຜົນວ່າ: ທ່ານ ອາໝັດ ຊາຮິດ ຮາມິດີ ໄດ້ເປີດເຜີຍຂໍ້ມູນທີ່ມີຄວາມມູນຄວາມຈິງໃນໄລຍະທີ່ມີການສືບສວນສອບສວນ ຈຶ່ງຂໍໃຫ້ຍົກຟ້ອງການກ່າວຫາ 46 ຂໍ້ໃນຈຳນວນ 47 ຂໍ້ ແຕ່ຖືກສານສູງປະຕິເສດ.

ພ້ອມນັ້ນ, ຜູ້ພິພາກສາຂອງສານສູງຂອງມາເລເຊຍ ຍັງໄດ້ອອກຄຳສັ່ງສະບັບໜຶ່ງໃນວັນທີ 24 ມັງກອນຜ່ານມາ ໃຫ້ທ່ານ ອາໝັດ ຊາຮິດ ຮາມິດີ ປະທານພັກສາມັກຄີມະເລເຊຍ ແກນຫລັກ 14 ພັກພັນທະມິດແນວຮ່ວມແຫ່ງຊາດ ໃຫ້ຍື່ນຄຳໃຫ້ການແກ້ຂໍ້ກ່າວໂທດ 47 ຂໍ້ ກ່ຽວກັບການສໍ້ລາດບັງຫລວງ, ການໃຫ້ສິນບົນ ແລະ ການຟອກເງິນ.

ທ່ານ ອາໝັດ ຊາຮິດ ຮາມິດີ ຖືກຟ້ອງ 12 ຂໍ້ກ່າວຫາທາງອາຍາຖານການກະທຳຜິດຕໍ່ໜ້າທີ່ທີ່ໄດ້ຮັບມອບໝາຍ ກ່ຽວຂ້ອງກັບກອງທຶນຂອງມູນນິທິການກຸສົນ ອາຢາຊານ ອາຄັນບູດີ ທີ່ທ່ານ ອາໝັດ ຊາຮິດ ຮາມິດີ ເປັນເຈົ້າຂອງ; ສ່ວນ 27 ຂໍ້ກ່າວຫາແມ່ນຄວາມຜິດຖານການຟອກເງິນ ແລະ 8 ຂໍ້ກ່າວຫາແມ່ນການໃຫ້ສິນບົນ.

ການດຳເນີນຄະດີຂອງສານຕໍ່ທ່ານ ອາໝັດ ຊາຮິດ ຮາມິດີ ໄດ້ເລີ່ມຂຶ້ນໃນເດືອນພະຈິກ 2019 ໂດຍມີການສອບສວນພະຍານ 99 ຄົນ.

ນອກຈາກຄະດີດັ່ງກ່າວ, ທ່ານ ອາໝັດ ຊາຮິດ ຮາມິດີ ຍັງຖືກດຳເນີນອີກ 40 ຄະດີໃນສານສູງ ທີ່ກ່ຽວຂ້ອງກັບລະບົບວີຊາຢູ່ຕ່າງປະເທດ.

**ແຫລ່ງຂ່າວ: Daily News**







